# -* ຊີ ວິ ດ ກັ ບ ເ ພັ ງ * -

ຂ ອ ງ

ສິລະປິນ ອາວຸໂສ
ອຸຕະມະ ຈຸລາມະນີ

---------------





ພະແນກຄົ້ນຄວ້າດົນຕີຣ ແລະ ສິລະປະເວທີ
ສະຖາບັນຄົ້ນຄວ້າວັດທະນະທຳ
1995

# -* ຊີ ວິ ດ ກັ ບ ເ ພັ ງ * -

# ຂ ອ ງ


## ສິລະປິນ ອາວຸໂສ

## ອຸຕະມະ ຈຸລາມະນີ


-----------------


ພະແນກຄົ້ນຄວ້າດົນຕີຣ ແລະ ສິລະປະເວທີ

**ສະຖາບັນຄົ້ນຄວ້າວັດທະນະທຳ**

**1995**



ສິລະປິນ ອາວຸໂສ
ອຸຕະມະ ຈຸລາມະນີ

ພາກບົດຂຽນໂດຍ : ບຸນແຕ່ງ ສຸກສະຫວັດ
ນັກທິດສະດີ ຕຳໜິວິໄຈ
ແລະ ຄົ້ນຄວ້າດົນຕີຣ

# -* ຄຳຂອບໃຈ *-

--------

ໃນນາມເປັນຜູ້ຂຽນ ແລະ ບັນທຶກໂນດໂຊນແຟ ກື້ມ " ຊີວິດກັບເພັງ " ຂອງສິລະປິນ ອາວຸໂສ ອຸຕະມະ ຈຸລາມະນີ ເຫຼັ້ມນີ້ ພວກຂ້າພະເຈົ້າທັງສອງ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງ ແລະ ຮູ້ບຸນຄຸນ ທ່ານ ປຣົດຖະນະ ຈຸລາມະນີ ພ້ອມດ້ວຍຄອບຄົວທີ່ໃຫ້ຂໍ້ມູນໂດຍລະອຽດ ກ່ຽວກັບຊີວິດ ແລະ ການປະພັນເພັງໃນແຕ່ລະໄລຍະຂອງ ທ່ານ ອຸຕະມະ ຈຸລາມະນີ ເພື່ອຊ່ອຍໃຫ້ການຂີດຂຽນ ຂອງພວກຂ້າພະເຈົ້າ ພົບແຕ່ຄວາມສະດວກແລະຊັດເຈນດີ.

ພ້ອມນີ້ ພວກຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈຢ່າງເລິກເຊິ່ງ ມາຍັງບັນດາທ່ານ ທີ່ໄດ້ສະຫຼະເຫື່ອແຮງສະຕິປັນຍາ ໃຫ້ຄວາມຮ່ວມມື ແລະ ປະກອບສ່ວນຢ່າງຈິງໃຈທາງດ້ານເນື້ອໃນ ກໍຄືການກວດແກ້ຄຳສັບ ທາງດ້ານ ພາສາສາດ ແລະ ຈັດໜ້າພິມເປັນຕົ້ນແມ່ນ:

1. ທ່ານ ທຸມພັນ ລັດຕະນະວົງ ຫົວໜ້າສະຖາບັນ ຄົ້ນຄວ້າວັດທະນະທຳ.
2. ທ່ານ ດຣ. ທອງເພັດ ກິ່ງສະດາ ຫົວໜ້າພະແນກພາສາສາດ (ສະຖາບັນຄົ້ນຄວ້າວັດທະນະທຳ )
3. ທ່ານ ຄຳເມີງ ສູນດາລາ ວິຊາບັນນາລັກສາດ
4. ທ່ານ ນ. ອຳທິລໍ ລັດທະຍອດ ວິຊາຄອມພິວເຕີ

ຂໍອວຍພອນໄຊແດ່ ທຸກໆທ່ານທີ່ເອີ່ຍຊື່ມາຂ້າງເທິງນັ້ນ ຈົ່ງປະສົບແຕ່ໂຊກໄຊ ຄວາມສຸກຄວາມຈະເລີນດ້ວຍ ອາຍຸວັນນະສຸຂະ ພະລະ ທຸກທິວາລາຕີການ ດ້ວຍເທີນ.

ບຸນແທ່ງ ສຸກສະຫວັດ ແລະ ຄຳພັນ ສີທິລັດ

# ສາຣະບານ

ໜ້າ


- ຄຳນຳ - ໂດຍທ່ານ ສີຊະນະ ສີສານ
- ຄຳອຸທິດ ໂດຍທ່ານ ທຸມພັນ ລັດຕະນະວົງ
- ຄຳເຫັນ ຂອງ ທ່ານຄຳມາ ພົມກອງ

ຈຳຜົນງານ ໂດຍທ່ານ ສົມສີ ເດຊາ

ອຸຕະມະ, ສິລະປິນອາວຸໂສ .......... 4

ອຸຕະມະ ກັບ ພອນສະຫວັນ .......... 9

ອຸຕະມະ ແລະ ສຽງເພງ .......... 13

ອຸຕະມະ ກັບ ລະຄອນເອກ .......... 32

ອຸຕະມະ ກັບ ການຕັດສິນໃຈຮ່ວມການປະຕິວັດ .......... 33

ຮູບພາບສະແດງເຖິງບັ້ນຕ່າງໆ ໃນຊີວິດຂອງອຸຕະມະ .......... 43

ພາກໂນດໂຊນແຟຊ ເພັງ .......... 55



ຂໍສະແດງຄວາມຂອບໃຈ ໃນການສະໜັບສະໜູນ

ຈາກໂຮງພິມປະຊາດ້ວຍ.

# ຄຳນຳ

***

ຂ້າພະເຈົ້າຮູ້ຈັກກັບ ທ່ານ ອຸຕະມະ ຈຸລາມະນີ ແຕ່ສະໄຫມຍັງຫນຸ່ມ. ເພິ່ນສີວີໂອລິງເກັ່ງ ແລະ ຫຼິ້ນເພັງລາວເດີມໄດ້ຫຼາຍເພັງ. ຂ້າພະເຈົ້າເຄີຍຫຼິ້ນດົນຕີຮ່ວມກັບເພິ່ນ ແຕ່ຂ້າພະເຈົ້າເປັນມືລະນາດ. ຢູ່ໃນປະເທດເຮົາມີນັກດົນຕີເປັນຈຳນວນບໍ່ນ້ອຍ ແຕ່ພວກນັກດົນຕີທີ່ແຕ່ງເພັງຊ້ຳບໍ່ຫຼາຍປານໃດ. ທ່ານ ອຸຕະມະ ໄດ້ເປັນຜູ້ຫນຶ່ງໃນຈຳນວນນັກດົນຕີ ທີ່ໃຊ້ຫົວຄິດປະດິດສ້າງໃນການແຕ່ງເພັງ.ໃນຊີວິດຂອງເພິ່ນ ທ່ານ ອຸຕະມະ ໄດ້ແຕ່ງເພັງຈຳນວນຫນຶ່ງ ເພິ່ນໄດ້ອາໃສຄວາມຮູ້ໃນເພັງລາວເດີມໃຊ້ທຳນອງເພັງລາວເດີມ ຫັນມາເປັນເພັງລາວສະໄຫມ. ເພັງທີ່ ທ່ານ ອຸຕະມະ ແຕ່ງອອກມີເພັງຖືວ່າເປັນອຳມະຕະ ໃນສູ່ມື້ນີ້ກໍ່ຍັງມີນັກຮ້ອງຫຼາຍຄົນ ໄດ້ນຳເອົາເພັງຂອງເພິ່ນໄປຮ້ອງ ແລະກໍ່ມີຫຼາຍຄົນ ເມື່ອເວລາເຕັ້ນລຳຈັງຫວະຕັງໂກ ກໍ່ມັກໃຊ້ເພັງດວງຈຳປາຂອງເພິ່ນ. ມີນັກວິຈານດົນຕີ ຄົນຕ່າງປະເທດບາງຄົນໄດ້ໃຫ້ຄວາມເຫັນວ່າ ເພັງຂອງທ່ານ ອຸຕະມະ ຫຼາຍເພັງໄດ້ແຕ່ງອອກຢ່າງຖືກຕ້ອງ ຕາມຫຼັກການແຕ່ງເພັງ,ໃຊ້ໂນດແບບງ່າຍ ແລະເພັງເຫຼົ່ານັ້ນໄດ້ເປັນທີ່ຈັບໃຈຂອງມວນຊົນລາວ, ໄດ້ມີເອກະລັກຂອງລາວແທ້ໆ. ຂ້າພະເຈົ້າເຫັນວ່າ ບັນດາເພັງຂອງ ທ່ານ ອຸຕະມະ ຄວນທີ່ຈະຮັກສາໄວ້ ແລະ ອາດເປັນແບບຢ່າງອັນດີໃຫ້ແກ່ນັກດົນຕີ ທີ່ມັກແຕ່ງເພັງລາວສະໄຫມ ເພື່ອສຶກສາໃນການແຕ່ງເພັງ ທີ່ມີເອກະລັກຂອງລາວ.

ວຽງຈັນ, ວັນທີ່ 1/8/94

ສີຊະນະ ສີສານ

# ** ຄຳອຸທິດ **

ມີຄົນລາວບໍ່ພໍເທົ່າໃດຄົນ ເຊິ່ງໃນຊຸມປີທີ່ 20-30 ຂອງຍຸກພວກເຮົາ ໄດ້ກາຍມາເປັນນັກບຸກເບີກ ເພັງລາວສະໄໝ ເປັນສຽງຮ້ອງຈູງໃຈທັງເປັນຄະຕິປ່າວເຕືອນ ແລະ ຊັກຊວນໃຫ້ຄົນລາວມືນຫູມືນຕາຕື່ນຂື້ນມາ ຈາກຄວາມຝັນຮ້າຍ ຈາກຄວາມຫຼົ້ມຈົມຂອງຊາດບ້ານເມືອງ ເປັນເວລາຍາວນານ ເຖິງສອງສະຕະວັດ ແລ້ວໂອ້ອ່າວຄະນຶງຫາຊາດຂອງຕົນ ຫວນຮັກຮໍ່ ແລະ ຫວງແຫນຊາດຂອງຕົນ. ໜຶ່ງໃນຈຳນວນວິລະບູລຸດເຫຼົ່ານັ້ນ ມີນີ້ລາງ ທ່ານ ອຸຕະມະ ຈຸລາມະນີ ເປັນເຈົ້າຂອງຜົນງານ ເຊິ່ງຈະຫາເພັດພອຍໃດໆ ແລະ ແກ້ວແຫວນແສນສິ່ງໃດໆປຽບປານບໍ່ໄດ້ນັ້ນຄື ເພັງ "ຈຳປາເມືອງລາວ"

ຜູ້ຄົນມັກຕັ້ງຄຳຖາມຂື້ນວ່າ ເປັນຫຍັງ ເພັງຂອງທ່ານຈຶ່ງກາຍເປັນຜົນງານອະມະຕະ ມີພະລັງອັນມະຫາສານໃນຄວາມງາມໃນຄວາມຮັກ ຄວາມດູດດື່ມ ຄວາມມ່ວນແມ້ງ ສົດຊື່ນ ແລະ ຄວາມສຸກໄດ້ ແລະ ເປັນຫຍັງຄົນທຳມະດາສາມັນ ເໝືອນດັ່ງພວກເຮົາເຈົ້າຂ້ອຍ ເຊິ່ງບໍ່ໄດ້ຮຽນໃນ ວິທະຍາຄານດົນຕີ ໃຫຍ່ແຫ່ງໃດຂອງໂລກມາກ່ອນເລີຍ ຈຶ່ງສາມາດປະກອບຜົນງານແບບຍອດຢ້ຽມ ເປື່ອງປີ້ມາປະດັບ ຄູ່ຄຽງຊາດລາວເຮົາຕະຫລອດກາລະນານໄດ້. ຂ້າພະເຈົ້າຄິດວ່າ ການທີ່ຈະໃຫ້ຄຳຕອບທີ່ແມ່ນຢຳນັ້ນ ເປັນເລື້ອງທີ່ບໍ່ງ່າຍດາຍປານໃດ ເພາະບົດເພັງຂອງທ່ານນັ້ນມັນແມ່ນຈິດວິນຍານ ແລະ ຊີວິດອິນຊີຂອງທ່ານເອງ. ມັນແມ່ນປິດສະໜາຂອງຄວາມຮັກ ແລະ ຄວາມງາມຄວາມຖະນຸຖະໜອມ ແລະ ຄວາມບໍລິສຸດ ຄວາມເສັຍສະຫລະ ແລະຄວາມສູງສົ່ງ ທີ່ທ່ານມີຕໍ່ສິ່ງທີ່ເກີດຂື້ນຢູ່ຮອບຕົວຂອງທ່ານເອງ ຄູ່ຄຽງແລະ ປະກອບເປັນຊີວິດຈິດໃຈຂອງທ່ານເອງ ນັບແຕ່ສິ່ງເລັກໆ

ນ້ອຍໆ ຈົນເຖິງດິນແດນແຫ່ງບ້ານເກີດ ແລະ ປະເທດຊາດຂອງທ່ານເອງ. ທ່ານ ຊ່າງມີປະຕິພານທາງກາວີສິນອັນລ້ຳເລີດ ສາມາດສ້າງຄຸນຄ່າອັນໃຫ່ຍຫລວງ ໃຫ້ແກ່ສິ່ງນ້ອຍໆທຳມະດາສາມັນເຊິ່ງຫນ້ອຍຄົນຈະເຮັດໄດ້ທຽບຄຽງທ່ານ.

"ໂອດວງຈຳປາ ເວລາຊົມນ້ອງ ນຶກເຫັນພົນຊ່ອງ ນອງເຫັນຫົວໃຈ..." ແມ່ນບໍ່ວ່າອັນນີ້ ແມ່ນການໃຫ້ຄຸນຄ່າອັນມະຫາສານ ແກ່ສິ່ງເລັກໆນ້ອຍໆ ເຊິ່ງຄົນເຮົາມອງຂ້າມສະເຫມີ. ຄວາມຮັກຄວາມຄິດເຖິງ ຄວາມປື້ມປີຕິ ແລະຄວາມສຸກ ຈະມີສິ່ງໃດປຽບປານໄດ້ ເມື່ອພົບຄົນຮັກທີ່ພັດພາກຈາກກັນ ໄປນານແສນນານ "ເມື່ອດົມກິ່ນເຈົ້າ ປານພົບຮູ້ເກົ່າທີ່ພາກຈາກໄປ..." ຄວາມງາມ ຄວາມສະເຫນຫາ ຄວາມໃຫ້ພະລັງຊີວິດ ແລະ ວິນຍານຄວາມຖະນຸຖະຫນອມ ແລະ ຄວາມຮັກຂອງເຈົ້ານັ້ນຮຽມອໍອຸທິດໃຫ້ເປັນສົມບັດຂອງຊາດລາວທຸກຄົນ.

"ໂອ້ດວງຈຳປາ ບຸບຜາເມືອງລາວ ງາມດັ່ງດວງດາວຊາວລາວເພິ່ງໃຈ ເກີດຢູ່ພາຍໃນດິນແດນລ້ານຊ້າງ..." ຈະມີອັນໃດວິເສດໄປກວ່າຄວາມບໍ່ເຫັນແກ່ຕົວ ແລະ ຈະມີອັນໃດຈະວິເສດໄປກວ່າ ການອຸທິດໃຫ້ຊາດ. ດວງຈຳປາທີ່ຂ້ອຍຮັກຂ້ອຍຖະນຸຖະຫນອມ ເຊິ່ງພໍ່ຂ້ອຍເປັນຜູ້ປູກໄວ້ ໃນສວນນ້ອຍຂອງຂ້ອຍນັ້ນ ທ່ານໄດ້ຍໍຖວາຍໃຫ້ເປັນຄວາມງາມ ແລະ ຊັບສົມບັດຂອງລາວທຸກຄົນ ເຊິ່ງໃຜໆກໍເພິ່ງໃຈ ແລະ ຫວງແຫນ "ເຈົ້າເປັນຍອດບຸບຜາແຫ່ງເມືອງລາວ" ນີ້ຄື ຄວາມອຸທິດອັນຍິ່ງໃຫ່ຍ ແລະ ສູງສຸດຂອງນັກປະພັນທ່ານນີ້. ທ່ານໄດ້ຜັດສີເຮັດໃຫ້ດອກໄມ້ທຳມະດາ ກາຍມາມີຄຸນຄ່າ ມີຄວາມສະເຫນຫາ ແລະກໍມອບໃຫ້ເປັນສົມບັດແກ່ບ້ານເມືອງໃຫ້ທຸກຄົນຮັກ ແລະຫວງແຫນຖືເອົາດອກຈຳປາເປັນດອກໄມ້ປະຈຳຊາດລາວ, ເມື່ອຮັກດອກຈຳປາກໍຮັກຊາດລາວນັ້ນເອງ. ຜົນງານຂອງທ່ານ ປຽບສະເຫມືອນຜົນງານຂອງປະຕິມະກອນ ສ້າງພະທາດຫຼວງເຊິ່ງເມື່ອສ້າງໃຫ້ງາມ

ຮຽບຮ້ອຍແລ້ວ ກໍອຸທິດສົມບັດສ່ວນໂຮມ ປະດັບຄວາມສະງ່າງາມ ຄວາມເອກອ້າງ ໃຫ້ແກ່ຊາດລາວຕະຫຼອດກາລະນານ.

ນີ້ເອງຄືປະຕິພານທີ່ແທ້ຈິງຂອງທ່ານ. ບົດເພງ ຂອງທ່ານນັ້ນປຽບເໝືອນກາຖາວິເສດເຂົ້າແທດເຖິງ ແລະ ສັ່ນຄອນໝາກຫົວໃຈຄົນລາວທຸກຄົນ ບັນດານຈິດ ແລະ ພະລັງອັນມະຫາສານ ໃຫ້ເຂົາເຈົ້າ ມີຈິດໃຈຮັກຊາດ ຮັກບ້ານເກີດ ເມືອງນອນ ຮັກເຊື້ອເຜົ່າພົງພັນພາຍໃນຊາດຕົນ . ຈາກບົດເພງ "ຈຳປາເມືອງລາວ" ຄົນເຮົາຕັ້ງແຕ່ເໜືອຕະຫຼອດໃຕ້ ໄດ້ຖືເອົາດອກຈຳປາ ເປັນສັນຍາລັກ ດອກໄມ້ປະຈຳຊາດຂອງຕົນ . ສ່ວນຂ້າພະເຈົ້າເດ ຂ້າພະເຈົ້າ ກໍມີແຕ່ຂໍໃຫ້ສັນຍາລັກ ດອກໄມ້ປະຈຳຊາດ ເຊິ່ງແມ່ນຄວາມຝັນ ຂອງມີ້ລາງ ທ່ານ ຜູ້ມີຜົນງານປະດັບຊາດທ່ານນີ້ ໄດ້ປະກົດເປັນຈິງ ແລະ ບົດເພງ "ຈຳປາເມືອງລາວ" ຍືນຍົງຄຽງຄູ່ ກັບຊາດຕະຫຼອດໄປ ຈົນຊົ່ວຟ້າດິນສະຫຼາຍ.

ວຽງຈັນ, ວັນທີ່ 16/8/94

ຫົວໜ້າ ສະຖາບັນຄົ້ນຄວ້າວັດທະນະທຳ

ທຸມພັນ ລັດຕະນະວົງ

# ຄຳເຫັນ

## ຂອງ

### ທ່ານ ຄຳມາ ພິມກອງ

---

ໃນນາມເພື່ອນຮ່ວມອຸດົມການ ທີ່ເຄີຍຮ່ວມປະຕິບັດງານຢູ່ນຳກັນ ໃນຄອບຄົວໂຄສະນາ-ອົບຮົມ ແລະສຶກສາວັດທະນະທຳ ນັບແຕ່ໄລຍະການປະຕິວັດປົດປ່ອຍຊາດ ມາເຖິງໄລຍະຕໍ່ສູ້ເພື່ອປົກປັກຮັກສາແລະສ້າງສາປະເທດຊາດ ຂ້າພະເຈົ້າເຫັນວ່າທ່ານອຸຕະມະ ຈຸລາມະນີ ໄດ້ໃຫ້ພາບປະທັບໃຈໄວ້ຫຼາຍປະການເຊິ່ງບໍ່ອາດເວົ້າສະເພາະ ແຕ່ຕໍ່ຂ້າພະເຈົ້າກັບບັນດາເພື່ອນຝູງເທົ່ານັ້ນ ແຕ່ຍັງຕໍ່ຜູ້ອື່ນໆຂອງທ່ານອີກ ເປັນຕົ້ນໃນດ້ານຄຸນສົມບັດທັດສະນະແຜນການເປັນຢູ່ທີ່ງ່າຍດາຍ ຕະຫຼອດຮອດມາລະຍາດອັນດີ ແບບສັນຊາດຍານທີ່ເປັນເອກະລັກສ່ວນບຸກຄົນຂອງເພິ່ນເຊັ່ນ: ຄວາມຂະຫຍັນຫມັ່ນພຽນຕໍ່ວຽກທີ່ຕົນຮັບຜິດຊອບຈາກການຈັດຕັ້ງ ຄວາມເອື້ອເຟື້ອເພື່ອແຜ່ຕໍ່ຜູ້ອື່ນ ຄວາມສະດຸ້ງໄວຕໍ່ຜົນກະທົບທັງອັນດີອັນບໍ່ດີທີ່ມາຈາກນອກຕົວ ແລະໃນຕົວ, ຄວາມເບີກບານມ່ວນຊື່ນ ແລະ ຄວາມ ທຸ່ນທ່ຽງຕໍ່ທຸກໆສະພາບແວດລ້ອມ.

ສຳລັບຄູ່ຊີວິດ ທີ່ຂາດບໍ່ໄດ້ຂອງເພິ່ນໃນຍາມນັ້ນ ເຫັນມີປາກກາ ເຈ້ຍຂຽນ ກັບຫນັງສືອ່ານ ທີ່ເວົ້າເຖິງບັນຫາຫຍັງໆກໍ່ໄດ້ ເພື່ອໄດ້ອ່ານ ແລະ ຢູ່ຂອກຂ້າງໄປອີກມັກມີ ວິໂອລິງ, ຊໍອີ້ ຫຼື ຊໍອູ້ ທີ່ມີອັນຍັງໃຊ້ໄດ້ ແລະອັນໃຊ້ບໍ່ໄດ້. ເວົ້າເຖິງເພັງລາວເດີມ ກໍຄືເພັງລາວສະໄຫມ ເວລານັ້ນປະກົດວ່າບໍ່ມີເພັງໃດເລີຍທີ່ເຄື່ອງເສບສີຂອງເພິ່ນຈະບໍ່ໄດ້ໄລ່ເມັດໄລ່ຫນ່ວຍ ພ້ອມທັງລູກສະບັດລູກສະນີ້ງຢ່າງບໍ່ໄດ້ຕົກໄດ້ເຮັ່ຍ. ໃນເວລາມີງານມ່ວນຊື່ນຫຼືຄົບງັນຕ່າງໆ ໃກ້ກັບບໍລິເວນສຳນັກງານຂອງເພິ່ນ ແມ່ນມັກ

ຈະມີເພີ່ນຜູ້ຫນຶ່ງທີ່ພວກນັກສີລະປະດົນຕີຣ ທັງຮຸ່ນຫນຸ່ມແລະຮຸ່ນແກ່ ມາຫຸ້ມຫໍ່ ທ່າມກາງບັນຍາກາດອັນຄຶກຄື້ນ ຂອງບັນດາແຂກຜູ້ມາຮ່ວມຟັງຮ່ວມຊົມ.

ບົດເພັງຈຳນວນຫນຶ່ງ ທີ່ທ່ານປະດິດຄິດແຕ່ງຂຶ້ນມານັ້ນ ເຫັນວ່າ ມີລັກສະນະຊາດ ລັກສະນະມະຫາຊົນ ແລະ ລັກສະນະຍຸກສະໄຫມເປັນຢ່າງດີ ເພາະເຫັນໄດ້ຈາກຄວາມນິຍົມຊົມໃຊ້ຢ່າງກວ້າງຂວາງ ຈາກບັນດານັກຮ້ອງ ແລະ ນັກເສບທາງພາຍໃນ ແລະ ຕ່າງປະເທດ. ສະນັ້ນດ້ວຍຄວາມຄິດຮອດ ແລະ ຄິດເຖິງ ຂ້າພະເຈົ້າເຫັນວ່າ ການຈັດພິມ ບັນດາບົດເພັງຂອງທ່ານໄວ້ເປັນອະນຸສອນ ຫຼື ອັດໄວ້ ເພື່ອສຶກສາຮ່ຳຮຽນ ສຳລັບນັກປະພັນວັນນະຄະດີ ຮຸ່ນສືບທອດ ຄົງເປັນການປະກອບສ່ວນ ອັນຫນຶ່ງເຂົ້າ ໃນການເສີມສ້າງປະຫວັດສາດດ້ານສີລະປະວັນນະກຳຂອງຊາດເຮົາ.

ວຽງຈັນ ,ວັນທີ 1 ກັນຍາ 1994

ຈື່ຈຳຜົນງານຜ່ານສຽງເພັງ ອະມະຕະ
ອຸຕະມະ ຈຸລາມະນີ

---

ໂດຍ ສ. ເດຊາ

ຄົນເກີດມາ ໃຜກໍໂຄຈອນອ້ອມ 12 ຊື່ລາສີ
ວັນ-ເດືອນ-ປີໝູນວຽນ ຫວ່ານຕົນໃຫ້ຄົນໃຊ້
ໃຜເກັບກຳເອົາໄດ້ ວັນເວລາອັນລ້ຳຄ່າ
ຮູ້ຈັກໃຊ້ເວລາ! ເປັນທຶນຮອນຕ່ອນຄ້າ ຫາໄດ້ຢູ່ທົ່ວໄປ

ໃຊ້ເວລາເປັນທຶນຄ້າ! ສາມາດສ້າງຂຶ້ນໄດ້
ກຳໄລໃຫ່ຍອະມະຕະ!
ບຸກຄົນນັ້ນກາຍເປັນຄົນ "ອະມະຕັງ" ແຫລ່ງພະລັງງານກ້າວ
ແຫຼ່ງກຳລັງ! ກຳໄລລາວນັ້ນແມ່ນສິດ ເປັນເຈົ້າອິດສະລະ
ເອກະລາດ !
ປະຫວັດສາດຕໍ່ສູ້! ທີ່ເຄີຍຮູ້ທົ່ວໄປ.

ອຸຕະມະທ່ານໄດ້ ໄຂກົບຈຳປາບານ!
ເພື່ອນຮ່ວມງານປະສານແສງ ແຕ່ງເພັງພະລັງກ້າວ
ເພັງ "ຈຳປາເມືອງລາວ" ຈຳປາດາວລຳຫ້າ
ຈອມສູງມະນຸດຊາດ ງາມສະອາດເອກອ້າງ
ບໍ່ວາງໄວ້ໃຫ້ຫມົ່ນຫມອງ

ໄດ້ແປງສຽງສະຫວັນທອງ ໃສ່ທຳນອງເນື້ອຮ້ອງ
ຖະຫນອມຮັກສັກສີ
ທ່ານ ອຸຕະມະ ຈຸລາມະນີ ! ທ່ານນາຍແພດທອງດີ !
ທ່ານ ມະຫາພູມີ

ທ່ານນາຍຄູຄຳສີ ..... ຮ່ວມງານຄາວນັ້ນ
ເປັນຕົ້ນວ່າເພັງຊາດ ! ເພັງລາວຮ່ວມສຳພັນ !
ປະສານສຽງໃສແຈ້ງ ດວງຈຳປາຄະນາຍາດ
ຮ່ວມສະແດງບົດບາດ ປຸກລະດົມເລັ່ງຟ້າວ ໃຫ້ລາວກູ້ຊີ່ລາວ !

ແຕ່ນັ້ນ ດວງຈຳປາເລົ້າກ້າວ ປະສານກ່ອມດົນຕີຣ
ສ້າງສະຕິ ອຸດົມການ ! ຈື່ບໍ່ລືມຊາດລາວໄດ້
ບໍ່ລືມດວງຈຳປາທີ່ບິດາມານດາ ! ປູ່ຍ່າລາວໝາຍໄວ້
ມະແດນສີສັດຕະນາກ
ພະລັງງານລ້ານຊ້າງ ສານກ້າກ່ອນມາ.

ປັດຈຸບັນກ້າວຂຶ້ນສູ່ຍອດຫ້າ ! ສັນຕິພາບວົງຈອນ
ເອກະລາດ,ປະຊາທິປະໄຕ,ເອກະພາບ, ວັດທະນາຖາວອນ
ແນ່ນອນສະໄໝນີ້
ປະສານແສງ ດວງສຸລີ ! ພະຈັນເພັງໃສແຈ້ງ
ຈັກກະວານລ້ານຍ່ານ
ແຈ້ງທົ່ວທະວີບ ! ຈຳປາຫ້າກີບກ້ານ ກໍ່ບານກູ້ມກ່ອມພະລັງ !

ນັ້ນຄື-ກີບໜຶ່ງ-ຫອມຮັກບານເບັ່ງຕັ້ງ,ເຕົ້າໝູ່ສາມັກຄີ
ກີບສອງ-ເສີມສັກສີດີກດັບ ! ໝັ້ນຂະໜັບປະກັນຄ້ຳ
ກີບສາມ-ເພີ່ມພະລັງບໍ່ຢຸດຢັ້ງ ປະຢັດຍອມໃຊ້ຈ່າຍ
ກີບສີ່ - ສັດຊື່ຜາຍໜ່ວານກ້າ ປັນຍາແຈ້ງສ່ອງໃສ

ກີບຫ້າ - ທ່ຽງທຳດຸ່ນດ່ຽງໄດ້ ສິດປະໂຫຍດມູນຖານ
ຈຳປາບານເມືອງລາວ ດັ່ງກ່າວມາເທິງນັ້ນ
ຄ້ຳປະກັນສະຖຽນໝັ້ນ ! ຍືນຍົງ !ສູງສົ່ງ !
ດັ່ງນັ້ນ ອຸດົມມະ ! ອະມະຕະ !
ເໝືອນຍັງຄົງຢູ່ຢັ້ງ ຍັງເດີນກ້າວຮ່ວມຂະບວນ

ຮ່ວມຕໍ່ສູ້ເສີມຂະຫຍາຍມູນເຊື້ອ ສິລະປະເພື່ອຊີວິດ
ຮ່ວມຕ້ານຢັ້ນສິລະປະສານພິດ ເບື່ອເມົາໂມໄຂ້
ແກ້ໄຂຄວາມຂັດແຍ້ງ ສອງສິ່ນແມ່ນປື້ນຕ່າງ
ສິລະປະ ເພື່ອຊີວິດ ! ແມ່ນປ້ອງກັນແລະກໍ່ສ້າງ
ພະລັງແຈ້ງແຂ່ງຂັນ
ໝາຍຄວາມວ່າ ປ້ອງກັນຊາດແລະກໍ່ສ້າງ
ໃຫ້ລາວຮຸ່ງສີວິໄລ !
ທັນສະໄໝ ! ທັນຍຸກ ! ພັດທະນາແສນດ້ານ !
ເສດຖະກິດປະສານດ້ວຍ ພັນດວງຕາ ແລະ ໄຫຼລາດ
ເສດຖະກິດເດີນຕະຫຼາດ ! ເສລີພາບໄຂ່ວຄ້າ !
ໃຫ້ຕາແຈ້ງກວ່າແສງ - ແດ່ທ້ອນ

14/10/1994

## ອຸຕະມະ ຈຸລາມະນີ ສິລະປິນ ອາວຸໂສ

******

ຊື່ສຽງ ພາລະກິດອັນລ້ຳເລີດ ແລະ ສະຫງ່າລາສີ ຂອງທ່ານ ອຸຕະມະ ຈຸລາມະນີ ຍາມໃດກໍ່ຈາລຶກໄວ້ຢູ່ໃນດວງໃຈຂອງຄົນລາວ ແລະ ສິລະປິນທຸກທົ່ວໜ້າ. ຕະຫຼອດຊີວິດ ທ່ານເປັນນັກປະພັນເພງຜູ້ດີເດັ່ນ ນັກປະຕິວັດຜູ້ຈົງຮັກພັກດີຕໍ່ ປະເທດຊາດບ້ານເກີດເມືອງນອນ, ຍອມເສຍສະຫຼະທຸກຢ່າງ ນັບທັງຊີວິດເລືອດເນື້ອ ແລະຄວາມສຸກສ່ວນຕົວ ເພື່ອຄວາມເປັນເອກະລາດອິດສະຫຼະພາບ ສິດເສລີພາບ ແລະ ການຢູ່ດີກິນດີຂອງປະຊາຊົນບັນດາເຜົ່າ.ໃນຂົງເຂດວຽກງານສິລະປະດົນຕຣີ ກໍຄືໃນວົງການເພງ ທ່ານ ແມ່ນຄວາມທະນົງໃຈຂອງຊາດລາວ ແລະ ໄດ້ປຽບເໝືອນດັ່ງດວງດາວ ທີ່ຮຸ່ງແຈ້ງບົນເວທີ ຂອງນັກປະພັນເພງ "ລາວສະໄໝ". xxx

ເກີດມາເປັນຄົນສຸຂຸມ ມີອາລົມຈິດ ແລະ ຄວາມນຶກຄິດອັນເລິກເຊິ່ງ ທັງແບບແຜນການດຳລົງຊີວິດ ແບບຂະຫຍັນໝັ່ນພຽນ ເຂັ້ມແຂງ ແຕ່ຮຽບງ່າຍເຍືອກເຢັນ ແລະ ມີຄວາມຮັກອັນດູດດື່ມຕໍ່ທຳມະຊາດ ຊຶ່ງສາມາດພັນລະນາອອກເປັນສຽງເພງ ແລະ ດົນຕີຣໄດ້ດີຢ່າງລ້ຳເລີດ ມີພະລັງແຮງໃນຕົນ ທີ່ຢັ່ງເລິກເຂົ້າເຖິງອາລົມຈິດ ພິຊິດດວງໃຈ ຂອງຜູ້ກ່ອມອາລົມໃຫ້ຫວນເຫັນເປັນມະໂນພາບ ອັນສວຍສົດງົດງາມ ແລະ ອອນຊອນຈົນພາໃຫ້ເພງຂອງເພິ່ນ ທີ່ບັນເລັງສິ່ງໃຫ້ມວນຊົນນັ້ນ ກາຍເປັນຂອງມະຫາຊົນ ແລະ ເປັນເພງອະມະຕະ ຈົນເທົ້າທຸກວັນນີ້. ລັກສະນະຂອງການ ປະພັນເພງຂອງທ່ານ ມີເອກະລັກຈຳເພາະຕົວ ຄືເອົາໃຈໃສ່ເນັ້ນໜັກທາງດ້ານຄຸນນະພາບ ຫຼາຍກວ່າປະລິມານ. ຈຳນວນເພງທີ່ທ່ານແຕ່ງແມ່ນບໍ່ຫຼາຍ, ມີປະມານ 10 ກວ່າເພງແຕ່ 10 ກວ່າເພງດັ່ງກ່າວ ລ້ວນແຕ່ເປັນເພງ ທີ່ແຕ່ງຂຶ້ນຖືກຕາມມາດຖານ ຂອງນັກປະພັນເພງແບບອາຊີບ. ມີຫຼາຍເພງໄດ້ກ້າວໄປເຖິງຍອດສູງຂອງສະຕິປັນຍາ ແລະ ສະຕິຊາດ

ພ້ອມທັງໄດ້ລະດັບສາກົນຄືເພັງ "ຈຳປາເມືອງລາວ" ທີ່ທ່ານແຕ່ງສຳເລັດໃນປີ 1942 ຊຶ່ງເປັນເພັງອະມະຕະ ໂດ່ງດັ່ງໄປທົ່ວໂລກ. ເພັງ "ໃບຕາບອກ" ທີ່ລືຊື່ເຄີຍໄດ້ຮັບລາງວັນດີເລີດໃນການແຂ່ງຂັນເພັງປະຈຳປີ.ຄົນລາວທົ່ວໄປຈຳໄດ້ດີ ແລະເອົາໄປຮ້ອງມ່ວນຊື່ນກັນຕະຫຼອດມາໃນໝູ່ສິລະປິນ ແລະ ສະຖານທີ່ບັນເທີງຕ່າງໆ. ເພັງ"ເດັດດອກຮັກ" ເພັງ"ເດືອນງາມຍາມໜາວ" ແຕ່ລະເພັງ ຕ່າງກໍໄດ້ຮັບຄວາມນິຍົມຊົມຊອບ ຈາກມະຫາຊົນທາງພາຍໃນ ແລະ ຕ່າງປະເທດ. ນອກນັ້ນ ທ່ານຍັງໄດ້ແຕ່ງປະເພດເພັງເດີນ ທີ່ມີລັກສະນະການຕໍ່ສູ້ ເພື່ອປຸກລະດົມຈິດໃຈຮັກຊາດຂອງຊາວໜຸ່ມຄື ເພັງ " ລາວລ້ານຊ້າງ ", ເພັງ "ຊາວໜຸ່ມລາວ" ເປັນຕົ້ນ. ໃນເຂດປົດປ່ອຍເກົ່າເດັ່ນກວ່າໝູ່ໃນປະເພດເພັງເດີນຍັງຄືງແມ່ນ ເພັງ "ປົກປັກສັນຕິພາບ" ທີ່ທ່ານແຕ່ງໃນໄລຍະປີ 1960 ເຊິ່ງເປັນໄລຍະສົງຄາມຕ້ານຈັກກະພັດຜູ້ຮຸກຮານ ທີ່ພວມຢູ່ໃນລະດັບຂອງຄວາມເຂັ້ມຂົ້ນ ແລະດຸເດືອດ ບົດເພັງໂດດເດັ່ນ ເຄັ່ງຂຶມເໝືອນຄຳຮຽກຮ້ອງທີ່ເດັດດ່ຽວໄດ້ກະຕຸກແຮງເຖິງຈິດໃຈຊາວລາວທຸກເຜົ່າ ໃນພາລະກິດປົດປ່ອຍຊາດຢ່າງພິລະອາດຫານ...

xxx

ສິລະປິນຜູ້ເປັນເຈົ້າຂອງເພັງອະມະຕະ ທີ່ກ່າວມາຂ້າງເທິງນີ້ ເກີດເມື່ອວັນທີ່ 18 ພຶສະພາ ປີ 1917 ທີ່ນະຄອນວຽງຈັນ ໄດ້ສ້າງຄອບຄົວ ແລະ ມີລູກນຳກັນ 5 ຄົນ, ເປັນລູກຊາຍກົກຂອງ ທ່ານ ມິງຄ ຈຸລາມະນີ (ເອີ້ນກັນທົ່ວໄປວ່າ ທ່ານຄູ ມອືງ) ແລະ ນາງ ເກີດ ເຊິ່ງເປັນຄອບຄົວຂ້າຣາຊການ. ນ້ອງຮ່ວມອຸທອນດຽວກັນ ຖັດຈາກທ່ານ ອຸຕະມະ ກໍແມ່ນ ທ່ານ ດຣ. ຕະລຸນະ ແລະ ນ້ອງຫຼ້າ ທ່ານ ປຣັດຖະນະ ອະດີດເອກອັກຄະລັດຖະທູດປະຈຳປະເທດອັງກິດ ແລະຕໍ່ມາປະເທດຊູແອັດ.

ທັງສາມອ້າຍນ້ອງສະຫງວນມັກສິລະປະດົນຕີຣ ແລະ ເພັງ ຍ້ອນມີພໍ່ເປັນຜູ້ຊຸກຍູ້ໃນດ້ານນີ້ ແລະ ເປັນແບບຢ່າງໃຫ້.

ທ່ານມ້ອງຜູ້ເປັນບິດາ ເປັນອາຈານຊັ້ນສູງທີ່ມີສະຕິຊາດ, ເປັນຄົນມີສິນທຳປະຈຳໃຈຊື່ຕົງ ແລະ ດຸໝັ່ນຂະໜັຍນພຽນ ພ້ອມທັງມີການດຳລົງຊີວິດປະຈຳວັນ ອັນມີລະບຽບແບບແຜນ ແລະ ເປັນເອກະລັກຈຳເພາະຂອງຄູອາຈານຄື ເຮັດວຽກການອອກແຮງງານ ຫຼີ້ນກິລາ.ເພິ່ນພັກຜ່ອນຢ່ອນອາລົມດ້ວຍການຫຼີ້ນດົນຕີຣ ຫຼືອ່ານປື້ມວັນນະຄະດີຕ່າງໆ ຫຼື ກ່ຽວກັບວິທະຍາສາດສັງຄົມ. ທ່ານ ຍັງມີຄວາມຮັກ ແລະ ຫວງແຫນວັດທະນະທຳລາວ ໂດຍສະເພາະ ດ້ານສິລະປະວັນນະຄະດີ ແລະ ດົນຕີຣພື້ນເມືອງລາວ ພ້ອມກັນນັ້ນ ຍັງເອົາໃຈໃສ່ສົ່ງເສີມສິ່ງໃຫ່ມທີ່ກ້າວໜ້າ ຢູ່ສະເໝີ. ທ່ານ ມັກເປົ່າແຄນເປັນພິເສດ ມັກອ່ານປື້ມ ນິທານພື້ນເມືອງແບບບູຮານ ແລະ ອ່ານກາບກອນອອກສຽງດັງ,ມັກຂັບລຳ ແລະ ຫຼີ້ນເຄື່ອງເສບພື້ນເມືອງອື່ນໆອີກ.

ທ່ານ ມ້ອງ ເປັນຄົນພື້ນຖານຫຼັກແຫຼງ ເມືອງທ່າແຂກ ແຂວງ ຄຳມວນ. ເພິ່ນໄດ້ສຳເລັດການສຶກສາ ຈາກໂຮງຮຽນສ້າງຄູ (ECOLE NORMALE SUPERIEURE) ອັນເປັນໂຮງຮຽນສຳຄັນແຫ່ງໜຶ່ງຂອງຝຣັ່ງເສດທີ່ຕັ້ງຢູ່ໄຊງ່ອນ ປະເທດຫວຽດນາມ. ນັບເປັນຄວາມພາກພູມໃຈ ຂອງຄອບຄົວຊາວນາຄອບຄົວໜຶ່ງຂອງລາວ ທີ່ພຽນພະຍາຍາມທ້ອນເງິນຄຳ ເປັນທຶນສົ່ງລູກໄປຮຽນຕໍ່ຢູ່ຕ່າງປະເທດ ເຊິ່ງເປັນເລື່ອງຫາຍາກໃນສະໃໝນັ້ນ. ເມື່ອກັບຄືນປະເທດ ທ່ານ ມ້ອງ ໄດ້ຮັບລາຊະການເປັນຄູອາຈານລາວຜູ້ທຳອິດ ທີ່ສອນຄຽງບ່າຄຽງໄລ່ກັບຄູຝຣັ່ງໂດຍສະເພາະສອນພາສາຝຣັ່ງ ແລະໄດ້ຮັບເງິນເດືອນເທົ່າທຽມກັບຄູຝຣັ່ງ. ນີ້ ສະແດງເຖິງການຍອມຮັບຄວາມສາມາດຂອງຄົນໃນປະເທດທີ່ວ ເມືອງຂຶ້ນໂດຍລັດຖະບານຝຣັ່ງໃນຄາວນັ້ນ.ເມື່ອມີຄວາມສາມາດລະດັບດຽວກັບຝຣັ່ງ ທ່ານ ຈຶ່ງບໍ່ຢ້ານໃນການຕໍ່ສູ້

ໃນຄາວຈຳເປັນ ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນແລະຂອງຊາດຫມູ່ນໃຊ້ສະຕິປັນຍາເພື່ອປະກອບສ່ວນເຂົ້າໃນພາລະກິດລວມຂອງຊາດ.

ເພິ່ນມີພອນສະຫວັນ ໃນການຫຼິ້ນເຄື່ອງດົນຕີຣພື້ນເມືອງ ໂດຍສະເພາະແມ່ນແຄນ ດັ່ງເວົ້າມາຂ້າງເທິງ.ສະນັ້ນວັນເວລາແຫ່ງຊີວິດ ຂອງເພິ່ນແຕ່ລະມື້ ແມ່ນເວົ້າໄດ້ວ່າມ້ວນທ້າຍລົງດວ້ຍການເປົ່າແຄນ. ເກືອບທຸກວັນໃນຕອນແລງ ເພິ່ນນັ່ງເບີຍເຢັນຢູ່ເທິງລະບຽງເຮືອນຊັ້ນເທິງຂອງເພິ່ນ ທີ່ຣ່ອມບ້ານວັດຈັນ ທາວັດອົງຕື້ ເມືອງຈັນທະບູລີ ກຳແພງນະຄອນວຽງຈັນ ບໍ່ໄກຈາກແຄມຂອງປານໃດ. ໃນຄວາມງຽບສະງັດຂອງຄ່ຳຄືນ ຜູ້ຄົນທັງຫຼາຍຢູ່ອ້ອມແອ້ມ ຫຼືກາຍໄປທາງນັ້ນຈະຄອຍມີຄວາມອອນຊອນນຳສຽງແຄນຂອງເພິ່ນ ທີ່ສົ່ງສຽງໄປຕາມສາຍລົມ ຈາກແຄມຂອງແຜ່ສະພັດໄປໃນຄວາມມືດງຽບຂອງຄ່ຳຄືນ ແລະ ບາງຄັ້ງພາຍໃຕ້ທ້ອງຟ້າເຊີ່ງປະດັບດວ້ຍດາວນ້ອຍໆ,ແສງເດືອນເພັງທີ່ໃສແຈ້ງຍິ່ງໃຫ້ຄວາມເປັນໃຈສາດສ່ອງໄປທົ່ວເຂດຄຸ້ມ ເຫມືອນດັ່ງເປັນແຮງຈູງໃຈ ກ່ອມໃຫ້ຄົນລາວຮັກບ້ານເກີດເມືອງນອນທີ່ມີທຳມະຊາດສວຍສົດງົດງາມ, ມີຫວ້ຍນ້ຳລຳເຊອຸດົມສົມບູນໄປດວ້ຍປ່າໄມ້ນາງຊະນິດ,ມີດອກໄມ້ຫອມຫວນເຊັ່ນ: ດອກຈຳປາ ອິນທະຫວາ,ຈຳປີ...ສຽງແຄນມີສ່ວນຊ່ວຍປຸກລະດົມຈິດໃຈລູກຫຼານລາວໃຫ້ຮັກແລະຫວງແຫນຜືນແຜ່ນດິນປິຕະພູມຂອງບັນພະບຸລຸດ ແລ້ວຄິດຢາກກອບກູ້ເອົາເອກະລາດ ແລະ ອິສະລະພາບມາສູ່ປະເທດຂອງຕົນ.

ຢູ່ພາຍໃນຄອບຄົວ ເວລາຫວ່າງໃນຕອນຄ່ຳ ທ່ານ ມົ້ອງມັກພາພວກລູກເຕົ້າ ໂຮມກັນຮ້ອງເພັງ, ຂັບລຳປະສານກັບສຽງດົນຕີຣພື້ນເມືອງ ຢ່າງມີຊີວິດຊີວາ ຫຼືບໍ່ ກໍຟັງເພິ່ນເປົ່າແຄນ. ແຄນຂອງເພິ່ນມີຫຼາຍຂະຫນາດ ນັບແຕ່ໃຫ່ຍສຸດເຖິງນ້ອຍສຸດ. ບາງຄັ້ງກໍຍັງປ່ຽນເປົ່າ ເພື່ອຄວາມຫຼາກຫຼາຍໃນສຽງເພັງ.

ຜູ້ເປັນແມ່ ກໍເປັນຜູ້ເອົາໃຈໃສ່ລູກເຕົ້າເປັນສຳຄັນ ໃນ

ດ້ານຊີວິດການເປັນຢູ່ , ດູແລສຸຂະພາບຢ່າງໃກ້ຊິດ , ເອົາໃຈໃສ່ພວກລູກໃນຫຼາຍບັນຫາຊີວິດ . ແມ່ກໍມີຄວາມຮັກມັກສິລະປະດົນຕີ ແລະ ສົນໃຈເລື້ອງລິເກ ທັງລະຄອນລໍາ . . .ເມື່ອມີໂອກາດເພິ່ນກໍພາກັນໄປເບິ່ງການສະແດງດັ່ງກ່າວ ຕາມໂຮງລະຄອນຕ່າງໆ . ສຽງອອນຊອນຂອງ ກາບກອນ ແລະ ເພງດັ່ງກະທົບເຂົ້າຫູພວກລູກເປັນປະຈໍາ ,ກ່ອມຈິດໃຈລູກໃນໄວເຍົາໃຫ້ເກີດຈິນຕະນາການອັນສົດໃສ ແລະ ເກີດຄວາມສະງວນມັກໃນສິລະປະດົນຕີຢ່າງດູດດື່ມ . ເມື່ອກໍາເນີດ ແລະ ເຕີບໃຫຍ່ໃນທ່າມກາງບັນຍາກາດການເຄື່ອນໄຫວດົນຕີ ເປັນປະຈໍາຢ່າງຟົດຟື້ນ ອຸດົມຮັ່ງມີດ້ວຍຫຼາຍຮູບຫຼາຍແບບຄືດັ່ງກ່າວນັ້ນ ຈຶ່ງພາໃຫ້ລູກຊາຍທັງສາມ ຕ່າງຄົນຕ່າງໄດ້ຮັບຜົນສະທ້ອນໂດຍກົງຈາກຂະບວນການ ນັບແຕ່ຄາວຍັງເປັນເດັກ ຈົນເຮັດໃຫ້ພວກລູກເກີດມີຄວາມຮັກມັກເພງ ແລະດົນຕີຮປະເພດຕ່າງໆ ຂຶ້ນຢ່າງວ່ອງໄວຄື: ລູກຊາຍກົກ ທ່ານອຸຕະມະ ມັກຟັງ ແລະ ຫຼິ້ນເຄື່ອງເສບ ພື້ນເມືອງລາວ ມັກແຕ່ງເພງຮ້ອງ. ເຖິງຈະມີສຽງຄໍດີ ຂັບລໍາໄດ້ ສາມາດເປັນນັກຮ້ອງດັງ ,ໝໍລໍາດີ ແຕ່ເພິ່ນບໍ່ຖືເປັນຕົ້ນຕໍ. ລູກຊາຍກາງທ່ານຕະລຸນະກໍເປັນຜູ້ມັກຟັງເພງ ແລະ ດົນຕີ ເປັນຕົ້ນປະເພດເພງເດີມເພິ່ນມີສຸຂະພາບເຂັ້ມແຂງ ຈຶ່ງກາຍເປັນຜູ້ມັກຮຽນຕີມວຍ ແລະຫຼິ້ນກິລາບານເຕະຢ່າງສຸດໃຈ .ສ່ວນລູກຊາຍຫຼ້າ ທ່ານປຣັດຖະນະພັດມັກຮ້ອງເພງ ແລະ ໃຫ້ຄວາມສົນໃຈເປັນພິເສດ ໃນສິລະປະເພງທຸກປະເພດ ນ້ອງຊາຍເອົາເພງຂອງອ້າຍແຕ່ງໄປຮ້ອງໄປເຜີຍແຜ່ເຊັ່ນ ເພງ "ໃນຕາບອກ" ເພງ "ເດັດດອກຮັກ" ເປັນຕົ້ນເຊິ່ງເຄີຍໄດ້ຮັບລາງວັນໃນອັນດັບດີເດັ່ນ ຜ່ານການຮ້ອງ ແຂ່ງຂັນເພງແຕ່ລະຄັ້ງ . . . ຕອນທີ່ ສາມອ້າຍນ້ອງພັດພາກຈາກກັນໄປໃນ ເວລາທີ່ປະເທດຊາດໄດ້ຖືກແບ່ງ ເປັນສອງເຂດປົກຄອງນັ້ນ ທ່ານ ປຣັດຖະນະ ເຄີຍໄດ້ສົ່ງຂ່າວຫາອ້າຍ ດ້ວຍການຮ້ອງເພງ "ໃນຕາບອກ" ອອກອາກາດທາງວິທະຍຸກະຈາຍສຽງແຫ່ງ

ຊາດຂອງຝ່າຍວຽງຈັນ. ເມື່ອໄດ້ຍິນແລ້ວ ອຸຕະມະ ກໍຮີບຝາກຈົດໝາຍມາຂ່າວໃຫ້ນ້ອງຊາຍຊາບເຖິງ "ການເປັນຢູ່ໃນເຂດປິດບ່ອຍ ພ້ອມດ້ວຍຄວາມຄິດຮອດຄິດເຖິງ ແລະ ຄວາມຫວັງອັນແຮງກ້າວ່າໃນອານາຄົດບໍ່ນານນີ້ ອ້າຍນ້ອງເຮົາທັງສາມຈະຕ້ອງໄດ້ພົບກັນ ແລະ ຢູ່ຮ່ວມກັນຄືເມື່ອກ່ອນຢ່າງແນ່ນອນ".

ຍ້ອນໄດ້ຮັບການສຶກສາດູແລຢ່າງໃກ້ຊິດຈາກພໍ່ແມ່ ຜູ້ເປັນຄູອາຈານ ລູກທັງສາມ ຈຶ່ງລ້ວນແຕ່ເປັນຄົນມີມາລະຍາດຄ່ອມຕົນ ແລະຮູ້ເຄົາລົບນັບຖືເຊື່ອຟັງຜູ້ໃຫຍ່, ໄດ້ຄວາມອົບອຸ່ນຈາກຄອບຄົວ ແລະ ຄວາມຮັກແພງຈາກສັງຄົມ ຊື່ສັດ ມີສິນທຳປະຈຳໃຈ ມັກຄວາມຍຸດຕິທຳ ກຽດຊັງການກົດຂີ່ຂູດຮີດ ບໍ່ມັກການຈຳແນກຊົນຊັ້ນ ແລະ ຊັ້ນຄົນ ຈິດໃຈເຕັມໄປດ້ວຍຄວາມຫວັງຈະໃຫ້ປະເທດຊາດ ເປັນເອກະລາດຢ່າງສົມບູນ ປະກອບດ້ວຍວັດທະນະທຳ ທີ່ເປັນເອກະລັກຂອງລາວແທ້.

xxx

ເມື່ອອາຍຸ 12 ປີ ອຸຕະມະ ເປັນເດັກສະຫຼາດ ສຸຂຸມ ແລະ ມີຄວາມສຳພັດໄວກັບດົນຕີ ເມື່ອຜູ້ເປັນພໍ່ເກີດມີອາລົມຢາກຮ້ອງລຳທຳເພັງຂຶ້ນເທື່ອໃດ ອຸຕະມະ ກໍ່ນັ່ງງຽບໆເພື່ອຮັບຟັງ ແລະຕິດຕາມການເຄື່ອນໄຫວ ຂອງພໍ່ ຢ່າງຈິງຈັງ ນັບເປັນເວລາຫຼາຍຊົ່ວໂມງ, ຕໍ່ມາ ທ່ານກໍສາມາດ ລອກແບບພໍ່ ຮ້ອງລຳທຳເພັງໄດ້ເໝືອນພໍ່ຢ່າງໜ້າຊື່ນຊົມ.

ເມື່ອຢ່າງເຂົ້າອາຍຸ 16 ປີ ພອນສະຫວັນຂອງ ທ່ານຍິ່ງປະກົດອອກຢ່າງເດັ່ນຊັດ ເມື່ອທ່ານສາມາດຂັບລຳ ແລະເປົ່າແຄນເປັນໃນຂັ້ນພື້ນຖານ, ອີກປະການໜຶ່ງເມື່ອເຫັນລູກຊາຍມີຄວາມກະຕືລືລົ້ນ ທາງດ້ານສິລະປະດົນຕີ ຝ່າຍພໍ່ແມ່ຍິ່ງມີຄວາມດີໃຈ ແລະ ຢາກສົ່ງເສີມລູກຂຶ້ນໄປເລື້ອຍໆ,ແຕ່ຍ້ອນວ່າສະໄໝນັ້ນ ບໍ່ມີໂຮງຮຽນດົນຕີ ອຸຕະມະ ຈຶ່ງບໍ່ສາມາດ ຕອບສະໜອງຈຸດປະສົງຂອງພໍ່ແມ່ ແລະ ຄວາມຕັ້ງໃຈຂອງຕົນ ຢາກໃຫ້ເປັນ

ສິລະປິນ ທີ່ເກັ່ງຕາມຫຼັກສູດ ທີ່ມີລະດັບແທ້. ແຕ່ແນວໃດກໍຕາມ ພໍ່ແມ່ຍັງຢາກໃຫ້ ລູກຊາຍກົກຄົນນີ້ເປັນຜູ້ສືບມູນເຊື້ອຂອງຄອບຄົວ ຈຶ່ງໄດ້ຕັດສິນໃຈສົ່ງ ທ່ານເຂົ້າຮຽນທີ່ໂຮງຮຽນ "ມັດທະຍົມປາວີ" (COLLEGE PAVIE) ທີ່ວຽງຈັນ, ແນ່ໃສ່ຈະສ້າງລູກຂອງເພິ່ນ ໃຫ້ເປັນຄູສອນ ຕາມຮອຍຂອງຜູ້ເປັນບິດາໃນຂັ້ນຕໍ່ໄປ.

ໂຮງຮຽນລະດັບນີ້ ມີແຕ່ຄູຝຣັ່ງ ແລະ ຫວຽດນາມເປັນອາຈານສອນ. ເບື້ອງຕົ້ນການຮໍ່າຮຽນກໍແມ່ນດີ ແຕ່ຕໍ່ມາບໍ່ພໍເທົ່າໃດ ອຸຕະມະປະສົບຄວາມຫຍຸ້ງຍາກ ເນື່ອງຈາກສຸຂະພາບບໍ່ອໍານວຍປານໃດ ລະບົບປອດບໍ່ແຂງແຮງ. ການປິ່ນປົວໃນສະໄໝນັ້ນຍັງບໍ່ທັນກ້າວໜ້າເທົ່າທີ່ຄວນ ຈຶ່ງພາໃຫ້ສຸຂະພາບອ່ອນເພຍແກ່ຍາວ ອັນເປັນຜົນສະທ້ອນເຖິງການຮຽນ ພາໃຫ້ຕົນເອງລໍາບາກໃຈທີ່ສຸດ ແລະໃນສາຍຕາຂອງຄູທີ່ເປັນຊາວຕ່າງປະເທດ ກໍຖືວ່າ ອຸຕະມະບໍ່ສາມາດຮຽນຕໍ່ໄປໄດ້. ໃນທີ່ສຸດ ອຸຕະມະກໍຕ້ອງອອກຈາກໂຮງຮຽນໄປເມື່ອອາຍຸ 18 ປີ ເພາະເຫດຜົນໜຶ່ງສໍາຄັນ ທີ່ພາໃຫ້ຕົນບໍ່ອາດທົນເບິ່ງໄດ້ ກໍ່ຄືສະພາບອັນເຕັມໄປດ້ວຍອັກຄະຕິ ແລະ ຄວາມບໍ່ຍຸດຕິທໍາຂອງໂຮງຮຽນ ທີ່ປົກຄອງໂດຍຄົນຕ່າງຊາດ, ເຊິ່ງພວກນີ້ຖືຄົນລາວຕໍ່າ ເມື່ອປຽບໃສ່ຄົນຊາດອື່ນທີ່ຮຽນຫ້ອງດຽວກັນ.

xxx

ຜູ້ເປັນພໍ່ແມ່ຮູ້ສຶກເສຍໃຈ ຕໍ່ເຫດການທີ່ເກີດຂຶ້ນ ເພາະທໍາມະດາ ພໍ່ແມ່ທຸກຄົນຍ່ອມປາຖະໜາ ຢາກໃຫ້ລູກໄດ້ຮຽນສູງຂຶ້ນເລື້ອຍໆ ແຕ່ພວກເພິ່ນສຸດທີ່ເຫັນໃຈລູກຊາຍ ຈຶ່ງເຮັດທຸກວິທີເພື່ອໃຫ້ກໍາລັງໃຈ ດ້ວຍການປຸກລະດົມ ໃຫ້ອຸຕະມະມີຄວາມທຸ່ນທ່ຽງ ແລະ ເຊື່ອໝັ້ນໃນຄວາມສາມາດ ແລະອະນາຄົດຂອງຕົນເອງຢູ່ສະເໝີ. ພາຍຫຼັງໄດ້ເອົາໃຈໃສ່ເບິ່ງແຍງ ປິ່ນປົວຢ່າງໃກ້ຊິດ ແລ້ວ, ພວກເພິ່ນກໍ່ໄດ້ສົ່ງໄປພັກຜ່ອນຕາກອາກາດຢູ່ເທິງພູເຂົາຄວາຍ, ອັນເປັນສະຖານທີ່ເໝາະສົມທີ່ສຸດ ເພື່ອຊ່ອຍໃຫ້

ສຸຂະພາບດີຂຶ້ນໂດຍໄວ. ດິນແດນເນີນສູງຂອງຖິ່ນນີ້ ທີ່ໄກຈາກວຽງຈັນ ປະມານ 60 ກມ. ມີອາກາດສົດໃສປອດໂປ່ງ ແລະ ປົກຄຸມໄປດ້ວຍທຳມະຊາດປ່າແປກ ແລະ ພືດພັນຂຽວສົດຊື່ນຢູ່ຕະຫຼອດເວລາ, ໃນຕອນເຊົ້າທີ່ເຢືອກເຢັນ ແລະ ໃນທຸກໆເຊົ້າ ອຸຕະມະ ຕ້ອງຍ່າງເລາະຫຼິ້ນຕາງທັດກາຍ ສວຍມາໜ້ອຍໜຶ່ງກໍ່ຂີ່ມ້າເລາະທ່ຽວຊົມທຳມະຊາດ ແນມໄປທາງໜ້າເຫັນທ້ອງຟ້າສີຄາມປົກຄຸມທົ່ວທົ່ງນາອັນກວ້າງໄກຢູ່ອ້ອມຂ້າງຫອມກິ່ນດວງດອກໄມ້ພືດສາໃນພົງໄພອັນໜາຕຶບ ພາໃຫ້ໃຈຝັກໄຝ່ສະຫງວນຫາໂອ້ດວງມາລາພາໃຫ້ຮຽນພັນລະນາອອກມາເປັນເພັງ. ການສຳພັດກັບທຳມະຊາດທີ່ແສນ "ໂຣແມນຕິກ" (ROMANTIC) ໃນຍາມທີ່ມີອິດສະລະເສລີຢ່າງເຕັມປ່ຽມໃນອາລົມຈິດອັນວ່າງເປົ່າ ໄດ້ເກີດມີຄວາມດູດດື່ມ ປຸກລຸກວິນຍານສິລະປິນຂຶ້ນມາໃນເວລານັ້ນ. ດັ່ງນັ້ນສຳລັບ ອຸຕະມະ ການອອກຈາກໂຮງຮຽນໄປປິ່ນປົວ ໄດ້ກາຍເປັນໂອກາດເໝາະດີທີ່ຫາໄດ້ຍາກ ເພື່ອການຊອກຮຽນຮູ້ຫຼາຍສິ່ງຫຼາຍຢ່າງຢູ່ນອກໂຮງຮຽນໂດຍສະເພາະດົນຕີຣພື້ນເມືອງອັນເປັນເລື່ອງ ທີ່ ອຸຕະມະເຄີຍຕັ້ງຈິດຈົດຈໍ່ປາຖະໜາມາກ່ອນ, ສະນັ້ນ ໃນສ່ວນເລິກຂອງຫົວໃຈແລ້ວ ອຸຕະມະ ຈຶ່ງບໍ່ຖືວ່າເປັນເລື່ອງກະທົບກະເທືອນຈິດໃຈຫຼາຍປານໃດ ແຕ່ຖືວ່າອັນນີ້ ເປັນບາດລ້ຽວແຫ່ງຊີວິດ ຕາມທິດທາງທີ່ຕົນມັກ ແລະ ຕາມພອນສະຫວັນທີ່ຕົນມີຄື: ຫຼິ້ນດົນຕີຣ ແລະແຕ່ງເພັງ. ຍິ່ງກວ່ານັ້ນເມື່ອຫວນຄືນລະນຶກເຖິງຄວາມສັ່ງສອນ ແລະ ປຸກລະດົມຂອງພໍ່ແລ້ວ ອຸຕະມະ ຍິ່ງມີກຳລັງໃຈ ມອງອະນາຄົດໄປໃນແງ່ສົດໃສຕື່ມ ຈະແມ່ນໃນເສັ້ນທາງດົນຕີຣ ຫຼື ທາງອື່ນໆກໍຄືກັນ.

ນັບແຕ່ວັນນັ້ນ ອຸຕະມະ ເລີ່ມຮຽນດົນຕີຣດ້ວຍຕົນເອງຢ່າງຂະຫຍັນຂັນແຂງ ໂດຍຜ່ານ ການຫຼິ້ນເຄື່ອງເສບພື້ນເມືອງຕ່າງໆ ບົນຈິດໃຈດຸໝັ່ນ ພາກພຽນ ໃນການຊອກຮຽນຮູ້ເຕັກນິກການເສບສີຊໍອີ້ພື້ນຖານ ແລະ ຝຶກຊ້ອມຢ່າງມີຄວາມມານະອົດທົນ

ເປັນປະຈຳ. ເບື້ອງຕົ້ນ ທ່ານ ຣຽນເປົ່າແຄນ ພໍ່ເປົ່າຈັ່ງໃດ ທ່ານ ກໍ່ພະຍາຍາມເປົ່າໃຫ້ໄດ້ດີຄືພໍ່. ຫຼັງຈາກນັ້ນບໍ່ພໍເທົ່າໃດ ທ່ານ ກໍ່ສາມາດເປົ່າແຄນເປັນ ແລະ ເກັ່ງອີກດ້ວຍ. ຖັດຈາກ ແຄນ ທ່ານ ຣຽນສີຊໍອີ້ແລ້ວຊໍອູ້ ຣຽນຕີລະນາດນຳຄູຜູ້ໜຶ່ງ ຊຶ່ງ ເປັນນີລະນາດເອກໂດ່ງດັງໃນເວລານັ້ນ ແລ້ວຣຽນດີດກະຈັບປີ, ຕີຂິມ,ເປົ່າຂຸ່ຍ ແລະ ເຄື່ອງເສບອື່ນໆທີ່ມີຢູ່ ໃນວົງດົນຕີມະໂຫລີ ລາວເຮົາ. ນອກນັ້ນ ທ່ານຍັງມີຄວາມສົນໃຈ ແລະ ມັກເຄື່ອງ ເສບວີໂອລົງ (VIOLON)ເປັນພິເສດ ຊຶ່ງໃນຕໍ່ມາກໍເປັນເຄື່ອງ ທີ່ເພິ່ນໃຊ້ຫຼາຍກວ່າເຄື່ອງເສບອື່ນໆ. ວີໂອລົງ ເປັນເຄື່ອງເສບ ສາກົນທີ່ມີບົດບາດສຳຄັນ ໃນພາກສ່ວນເຄື່ອງສາຍຂອງວົງດົນຕີຣ " ຊິມໂຟນີ " (SYMPHONY) ເຄື່ອງເສບດັ່ງກ່າວ ມີເຕັກນິກ ການເສບທີ່ຍາກກວ່າ ເມື່ອທຽບໃສ່ເຄື່ອງອື່ນໆ. ຢູ່ວິທະຍາຄານ ດົນຕີຕ່າງໆໃນໂລກ ກ່ອນຈະກາຍເປັນນັກສິລະປິນວີໂອລົງ ໂດຍ ສົມບູນຄົນໜຶ່ງໄດ້ ຜູ້ນັ້ນຕ້ອງຜ່ານຫຼັກສູດການຣຽນ 16 ປີເຕັມ ຈຶ່ງສາມາດກ້າວເຂົ້ານັ່ງເສບ ໃນວົງດົນຕີຣດັ່ງກ່າວ. ແຕ່ສຳລັບ ທ່ານແລ້ວ ການເສບສີວີໂອລົງ ບໍ່ໄດ້ເປັນເລື້ອງຍາກພໍເທົ່າໃດ, ມັນເປັນພຽງພາຫະນະ ເຄື່ອງມືດົນຕີຣຢ່າງໜຶ່ງ ເໝືອນຊໍດວງ ໃຫ່ຍເທົ່ານັ້ນ, ແລະມີບາງຄັ້ງ ທ່ານ ກໍສີວີໂອລົງໂດຍບໍ່ໄດ້ຄາບ ໃສ່ຄາງ ຕາມຫຼັກການເສບ ວີໂອລົງທົ່ວໄປ ແຕ່ເອົາຕັ້ງໄວ້ເທິງ ຂາຂອງຕົນເໝືອນກັບຊໍລາວ. ອັນນີ້ ສະແດງເຖິງຫົວຄິດປະດິດ ສ້າງຕາມລັກສະນະຂອງຕົນເອງ ທີ່ແຕກຕ່າງຈາກສາກົນມາເປັນ ແບບເອກະລັກລາວຂອງຊາດນິຍົມ. ນອກຈາກເອົາໃຈໃສ່ ຣຽນ ດົນຕີຣແລ້ວ ທ່ານ ຍັງເລີ້ມແຕ່ງເພັງຕື່ມອີກ. ທ່ານແຕ່ງບົດເພັງ ຄັ້ງທຳອິດໃນຊີວິດ ຕາມອາລົມບັງເອີນແບບແຕ່ງຫຼິ້ນແຕ່ງຫົວແຕ່ງ ແລ້ວຮ້ອງແລ້ວກໍ່ລືມໃປ ຄືກັບນ້ອງຊາຍທີ່ເຄີຍປະຕິບັດແບບນີ້ ມາ ໄລຍະໜຶ່ງແຕ່ງແລ້ວກໍຖິ້ມໄປ. ຕໍ່ມາທ່ານແຕ່ງເພັງໂດຍປະສານ ກັບໝູ່ເພື່ອນດວ້ຍຫຼາຍວິທີ ແລະ ຮູບແບບຄື ຜູ້ໜຶ່ງແຕ່ງເນື້ອ ຜູ້

ໜຶ່ງແຕ່ງທຳນອງ ຫຼື ຄິດແຕ່ງພອ້ມກັນທັງເນື້ອ ແລະ ທຳນອງ ໂດຍແບ່ງອອກເປັນວັກເປັນທ່ອນ ແລະອື່ນໆ. ພວກເພິ່ນທັງແຕ່ງ ທັງຖອດຖອນບົດຮຽນ ແລ້ວຊອກຮູ້ນຳກັນ, ມີຫຼາຍຄັ້ງພົບຄວາມ ຫຍຸ້ງຍາກ ພວກເພິ່ນກໍນຳເອົາບົດເພັງຕ່າງໆ ຂອງນັກແຕ່ງຮຸ່ນ ອ້າຍເຊັ່ນ: ດຣ ທອງດີ ສູນທອນວິຈິດ, ຄູຄຳສີ ສີຣິມະໂນທຳ ມາວິໄຈ ແລະ ລອກແບບ. ນັກແຕ່ງເພັງສະໝັກຫຼິ້ນໃນຮຸ່ນເພິ່ນ ເວລານັ້ນຖືວ່າບໍ່ມີຫຼາຍ,ທີ່ຈຳໄດ້ມີຄື: ພຸຍ ສີທາຣາດ,ຈັນທອມ. ..ເປັນຕົ້ນ ແລະ ຕໍ່ມາກໍ່ມີ ບຸນທະນະລີ, ຄຳອ້ວນ....

ບາງຄັ້ງພວກເພິ່ນກໍ່ຊອກຮູ້ ນຳບົດລຳ ທຳນອງເພັງ ທີ່ມີ ຢູ່ໃນຄັງສາງດົນຕີຣພື້ນເມືອງລາວ ແລະເພັງສາກົນຈຳນວນໜຶ່ງ ທີ່ພວມໄດ້ຮັບການເຜີຍແຜ່ ຢູ່ປະເທດເຮົາໃນໄລຍະນັ້ນ ເພື່ອມາ ເປັນທິດທາງສຳລັບການແຕ່ງ. ເຮັດແນວນັ້ນກໍ່ເຫັນວ່າໄດ້ຮັບຜົນ ດີ ໂດຍສະເພາະໃນເນື້ອາຕົ້ນ.ແຕ່ໜ້າເສຍດາຍທີ່ສຸດເພາະນັກ ແຕ່ງເພັງຮຸ່ນເກົ່າຄືດັ່ງທ່ານ ບໍ່ທັນຮູ້ຈັກໃຊ້ໂຊນແຟຊ(Solfege) ຈຶ່ງບໍ່ສາມາດບັນທຶກ ບົດປະພັນເພື່ອເກັບໄວ້ເປັນລາຍລັກອັກສອນ. ພວກເພິ່ນທັງແຕ່ງທັງຮ້ອງ ແບບສືບຕໍ່ກັນດ້ວຍປາກເປົ່າ ຈຶ່ງເຮັດ ໃຫ້ເພັງຈຳນວນຫຼວງຫຼາຍໃນອາດີດຜ່ານວັນເວລາຫຼາຍສິບປີ ຖືກ ຫຼົງລືມ ແລະຫາຍໄປຢ່າງໜົດສິ້ນ.

xxx

ຄວາມພະຍາຍາມ ໃນການປະດິດຄິດແຕ່ງຂອງທ່ານໃນ ໄລຍະນັ້ນ ໄດ້ປະສົບຜົນສຳເລັດຢ່າງງົດງາມ ເມື່ອທ່ານສາມາດ ໃຫ້ກຳເນີດຫຼາຍເພັງ ຕິດຕໍ່ກັນເປັນຕົ້ນ: ເພັງ " ດອກຈຳປາ" ເພັງ "ໃນຕາບອກ" ເພັງ "ເດັດດອກຮັກ" ເພັງ"ເດືອນງາມ ຍາມໜາວ..." ແລະປະເພດເພັງເດີນເຊັ່ນ:"ລາວລ້ານຊ້າງ" "ຊາວໜຸ່ມລາວ" ແຕ່ລະເພັງໄດ້ຮັບຄວາມນິຍົມຊົມຊອບ ຢ່າງ ກວ້າງຂວາງຈາກມະຫາຊົນພາຍໃນ ແລະ ຕ່າງປະເທດ.

ຈາກອາລົມຈິດຂອງໄວໜຸ່ມ ຈຶ່ງໄດ້ມີເພັງທີ່ເປັນຜົນງານ ດ້ານເພັງປະເພດອອນຊອນອອກມາເຊັ່ນ: ເພັງເດັດດອກຮັກຊຶ່ງ

ເພັງນີ້ກໍເປັນເພັງໜຶ່ງ ທີ່ໄດ້ຮັບຄວາມນິຍົມມາກ່ອນ. ຜູ້ແຕ່ງໄດ້ໃຊ້ດອກໄມ້ພື້ນເມືອງຂອງລາວ ທີ່ຄົນລາວໃຊ້ເປັນສັນຍາລັກແຫ່ງຄວາມຮັກຈົນເຖິງກັບວ່າພາຂວັນໃນວັນວິວາຫະມຶງຄົນ ລະຫວ່າງຄູ່ບ່າວສາວຕາມຮີດຄອງປະເພນີ ກໍຍັງເກືອບວ່າຂາດດອກຮັກ ບໍ່ໄດ້.ເພັງ "ໃນຕາບອກ"ເປັນເພັງທີ່ມີຄະແນນພິເສດ ໃນຄວາມເຫັນຂອງມະຫາຊົນ ແລະ ເປັນເພັງທີ່ ແຜ່ລາມໄປຫຼາຍສົມຄວນໃນໝູ່ຄົນລາວເຮົາ. ນັບແຕ່ໄດ້ຮ້ອງເຜີຍແຜ່ໃນວິທະຍຸກະຈາຍສຽງແຫ່ງຊາດເປັນຕົ້ນມາ ກ່ອນປີ 1975 ປະກົດວ່າ ເພັງນີ້ໄດ້ຕິດປາກຕິດໃຈຕິດຫູຕິດຕາຫຼາຍຄົນ ຈົນວ່າໃນງານຕ່າງໆກໍຍັງມີຜູ້ຂໍຟັງຢູ່ເລື້ອຍໆ ຈາກຜູ້ທີ່ຮ້ອງເພັງນີ້ໄດ້.

ການແຕ່ງ ໄດ້ໃຊ້ຫົວຄິດປະດິດສ້າງແບບນັກປະພັນອາຊີບກໍ່ວ່າໄດ້ໃນໄລຍະນັ້ນ ທັ້ງໆທີ່ພວກເພິ່ນ ຍັງນຳໃຊ້ໂນດໂຊນແຟຊບໍ່ໄດ້ເທື່ອ. ນັກຮ້ອງຕ້ອງໃຊ້ການລີລາສຽງແບບອອນຊອນອີ່ຫຼືຈະຫັນອອກຈາກໂນດເດີມ ແມ່ນບໍ່ໜ້າຟັງເທົ່າທີ່ຄວນ ແລະ ຈະບໍ່ອະມະຕະແທ້ ຕາມຄວາມນິຍົມຊົມຊອບຂອງຜູ້ຟັງ. ເນື້ອໃນກໍມີຄວາມໝາຍເລິກເຊິ່ງທີ່ສຸດ: <ສາຍຕາບອກເຖິງຄວາມນຶກຄິດຈາກໃຈ ໂດຍໝາຍເຖິງຄວາມຮັກອັນດູດດື່ມທີ່ອ້າຍມີຕໍ່ນ້ອງ.ຖ້ານ້ອງຫາກປະສານຕອບອ້າຍ ດ້ວຍສາຍຕາອັນຫວານຊື່ນ ອ້າຍຈະຕ້ອງ ເປັນຜູ້ມີຄວາມສຸກທີ່ສຸດໃນໂລກ !>

ຍ້ອນບໍ່ມີເງື່ອນໄຂໄປຮຽນຕໍ່ ແລະເຂົ້າໄປເຖິງມະຫາວິທະຍາໄລທ່ານ ອຸຕະມະ ຈຶ່ງໄດ້ຖືກແຕ່ງຕັ້ງໃຫ້ ເປັນຄູສອນໂຮງຮຽນຊັ້ນປະຖົມ. ຕາມການບອກເລົ່າຂອງບັນດາຄູອາວຸໂສ ທີ່ຜູ້ຂຽນໄດ້ພົບພໍ້ພວກເພິ່ນໄດ້ໃຫ້ຮູ້ວ່າ ທ່ານ ອຸຕະມະ ເປັນຄູຜູ້ໜຶ່ງທີ່ມີລະບຽບແບບແຜນເຄັ່ງຄັດສົມຄວນ ໃນການປະຕິບັດລະບຽບວິໃນ ແລະ ຫຼັກການຕ່າງໆຂອງຄູສອນ ພ້ອມກັນນັ້ນໄດ້ສ້າງຄວາມຮັກແພງສາມັກຄີ ລະຫວ່າງບັນດານັກຮຽນ ແລະ ຄູດ້ວຍກັນ. ກ່ອນອອກໄປເຮັດການປະຕິວັດ (ໝາຍເຖິງກ່ອນປີ 1945).

ເພິ່ນໄດ້ໄປສອນຢູ່ຫຼາຍບ່ອນ ເປັນຕົ້ນຢູ່ບ້ານທ່າງ່ອນ, ບ້ານບໍ່ໂອ ແລະ ບ້ານ ສີໃຄ. ແຕ່ລະບ່ອນເພິ່ນໄດ້ສ້າງຄວາມຮັກແພງ ໄປມາຫາສູ່ ຢື້ຢາມຖາມຂ່າວ ເຮັດໃຫ້ເປັນນ້ຳໜຶ່ງໃຈດຽວກັບຊາວບ້ານ ທີ່ຍັງຄົງເຫຼືອຢູ່ຈົນເຖິງທຸກວັນນີ້. ສຳລັບນັກຮຽນ ເພິ່ນໄດ້ສ້າງຂະບວນການກິລາ ແລະ ການເຄື່ອນໄຫວແບບໜຸ່ມເຍົາວະຊົນ. ພ້ອມກັບນັ້ນ ກໍ່ບໍ່ໄດ້ລືມລະປຸກລະດົມພວກເດັກ ແລະ ຊາວໜຸ່ມທີ່ເພິ່ນສອນ ໃຫ້ມີຈິດໃຈຮັກຊາດ ມີຄຸນສົມບັດດີ ແລະ ມີຄວາມເຂັ້ມແຂງກ້າຫານ, ອົດທົນທຸກທໍລະມານ ເພື່ອຜ່ານຜ່າ ແລະ ຟັນຟ້າອຸປະສັກຕ່າງໆ. ດ້ວຍຜົນງານດັ່ງກ່າວ ທ່ານ ອຸຕະມະ ຈຶ່ງຖືກແຕ່ງຕັ້ງ ໃຫ້ເປັນຄູ່ຝຶກສອນບັນດາຄູໃນຮຸ່ນດຽວກັນ ເພື່ອຖ່າຍທອດບົດຮຽນຂອງຕົນ ໃຫ້ແກ່ບັນດາຄູສອນດ້ວຍກັນ. ນອກນັ້ນ ທ່ານຍັງຖືກສົ່ງໄປຝຶກຊ້ອມດ້ານກິລາ ແລະ ເຍົາວະຊົນໃນໂຮງຮຽນ ສ້າງເຍົາວະຊົນຢູ່ຕ່າງປະເທດອີກ ໂດຍສະເພາະປະເທດຫວຽດນາມ (ພາກໃຕ້). ສະຫລຸບແລ້ວແມ່ນປະຕິບັດໜ້າທີ່ວິຊາສະເພາະ ແລະ ໜ້າທີ່ປຸກລະດົມຂົນຂວາຍ ແລະ ກໍ່ສ້າງການຈັດຕັ້ງຊາວໜຸ່ມໃນຖັນແຖວຄູສອນ ແລະ ນັກຮຽນ ຊຶ່ງເພິ່ນໄດ້ຖືເປັນວຽກສຳຄັນຂອງຊີວິດໄວໜຸ່ມ ໃນບັນຍາກາດແຫ່ງສະພາບການບ້ານເມືອງເວລານັ້ນ ເຊິ່ງຢູ່ພາຍໃຕ້ກະແສຟອງແຫ່ງຄວາມຮັກຊາດ ຂຶ້ນສູ່ຍອດສູງ ເພື່ອກຽມກ້າວເຂົ້າ ບາດລ້ຽວປະຫວັດສາດ ປົດປ່ອຍຊາດຄັ້ງທຳອິດໃນປີ 1939 - 1945. ຈາກນັ້ນ ຊີວິດໄດ້ເລີ່ມຕົ້ນ ມີລັກສະນະການເມືອງຢ່າງຈະແຈ້ງຈົນໄດ້ຈູງໃຈໃຫ້ເກີດແນວຄິດອັນດູດດື່ມ ໃນຄວາມເຂັ້ມແຂງຂອງຊາວໜຸ່ມ, ອຸຕະມະ ຈຶ່ງໄດ້ໃຫ້ກຳເນີດປະເພດເພງເດີມ ອອກມາເຊັ່ນ ເພງ "ຊາວໜຸ່ມລາວ" ເພງ "ລາວລ້ານຊ້າງ". ເພງດັ່ງກ່າວ ໄດ້ປະພັນຂຶ້ນໃນສະພາບການເຄັ່ງຮ້ອນຂອງນ້ຳໃຈຮັກຊາດຂອງລາວຜູ້ມີຫົວກ້າວໜ້າ. ພວກນັກຮຽນຊາວໜຸ່ມທຸກໆຄົນ ໄດ້ຮ້ອງເພງນີ້ຢ່າງຟົດຟື້ນ ໃນເວລາເດີນສວນສະໜາມ

ໂຮມຊຸມນຸມ ແລະ ພິທີຕ່າງໆ ໂດຍສະເພາະ ໃນໄລຍະປະເທດ ຊາດກຽມປະກາດເອກະລາດ ຈາກພວກລ່າເມືອງຂຶ້ນຝຣັ່ງ ໃນ ວັນທີ່ 12 ເດືອນຕຸລາ 1945. ແຕ່ຫນ້າເສຍດາຍທີ່ວ່າເພັງຊຸດ ນີ້ ມາເຖິງປະຈຸບັນບໍ່ສາມາດບັນທຶກເປັນໂນດໂຊນແຟຊ ປະກອບ ຄືນໃຫມ່ ເນື່ອງຈາກບໍ່ມີໃຜຈື່ດຈຳທຳນອງໄດ້ດີ.

xxx

ເພັງ " ຈຳປາເມືອງລາວ " ແມ່ນຜົນງານອະມະຕະ ຂອງທ່ານ ອຸຕະມະ ຈຸລາມະນີ ທີ່ເວົ້າໄດ້ວ່າ: ມາເຖິງປະຈຸບັນ ເພັງລາວສະໄຫມທີ່ມີອາຍຸຍືນຍາວຫຼາຍກ່ວາ ແລະ ຄອງຄວາມ ເປັນຫນຶ່ງທີ່ຝັງໃຈຂອງຄົນລາວທຸກຄົນທຸກຮຸ່ນທຸກໄວນັ້ນ ແມ່ນເພັງ ຈຳປາເມືອງລາວນີ້ເອງ.

ຜູ້ແຕ່ງໄດ້ສັງລວມເອົາຍອດສູງ ຂອງຄວາມຮັກຊາດບ້ານ ເກີດເມືອງນອນ ມາສິງສະຖິດວັນຍານເຂົ້າໃນດວງດອກໄມ້ອັນ ງົດງາມຫອມຫວນ ທີ່ຊາວລາວທຸກຄົນຮັກໃຄ່ ແລະ ຍົກຍ້ອງວ່າ ເປັນດອກໄມ້ປະຈຳຊາດ. ຄົນລາວນັບທັງນ້ອຍ ແລະ ໃຫຍ່ໃຜກໍ່ ຮູ້ເພັງນີ້ ຕິດໃຈ ແລະ ຮ້ອງໄດ້ຕິດປາກ ຖ້າບໍ່ໄດ້ຫມົດກໍ່ຍັງຮ້ອງ ໄດ້ຢູ່ບາງຕອນ. ແຕ່ຕອນທີ່ປະທັບໃຈ ແລະ ລືມບໍ່ໄດ້ແມ່ນວັກສຸດ ທ້າຍ "ໂອ້ດວງຈຳປາ ບຸບຜາເມືອງລາວ ງາມດັ່ງດວງດາວ ຊາວລາວເພິ່ງໃຈ ເກີດຢູ່ພາຍໃນ ແດນດິນລ້ານຊ້າງ ເມື່ອໄດ້ ພັດພາກເນລະເທດຈາກບ້ານເກີດເມືອງນອນ ເຮົາຈະເອົາເຈົ້າ ເປັນເພື່ອນຮ່ວມເຫີງາ ເທົ່າຊົ່ວຊີວາ ໂອ້ດວງຈຳປາມາລາຂວັນ ຮັກຂອງຮຽມນີ້ເອີຍ."

ໃນເບື້ອງຕົ້ນ ເພັງນີ້ໄດ້ມີຊື່ວ່າ ດວງຈຳປາ, ບາງເທື່ອ ກໍ່ຂຽນວ່າເພັງ "ດອກຈຳປາ" ສຸດທ້າຍໄດ້ກາຍມາເປັນເພັງ " ຈຳປາເມືອງລາວ ". ສະນັ້ນ ຄົນລາວທຸກຄົນຈຶ່ງເຂົ້າໃຈວ່າ ດອກຈຳປາ ໄດ້ກາຍເປັນສັນຍາລັກຂອງຊາດລາວແທ້. ຈາກ ເນື້ອໃນ ທີ່ພັນລະນາເຖິງຄວາມອາໄລອາວອນ ຫາບ້ານເມືອງ

ລາວ ໃນຄາວຕ້ອງພັດພາກຈາກໄປ ແຕ່ຫາກເຣັດເປັນເພັງເພີນ ໃຈໃນຮູບພາບຂອງການຜູກພັນ ກັບດວງດອກຈຳປາ ພາໃຫ້ຄົນລາວ ທີ່ໄດ້ຫນີຈາກ ບ້ານເກີດເມືອງນອນໄປ ດ້ວຍເຫດຜົນໃດກໍ່ຕາມໄປຍ້ອນສະພາບການທາງການເມືອງ ຕາມອຸດົມຄະຕິຕ່າງໆກັນ ຫຼືໄປດ້ວຍເສີກສົງຄາມ ຫຼືຈາກບ້ານໄປຍ້ອນບັນຫາສ່ວນຕົວກໍ່ຕາມ ແຕ່ສຸດທ້າຍທຸກຄົນຍັງບໍ່ລືມເພັງນີ້ ເມື່ອໃດຫາກມີຜູ້ຂໍວ່າໃຫ້ຮ້ອງເພັງລາວໃຫ້ຟັງແດ່, ຄົນລາວຈຳນວນຫຼາຍ ກໍ່ມັກຈະເລືອກເອົາເພັງດອກຈຳປານີ້ ມາສະແດງຫຼາຍກ່ວາເພັງອື່ນສະເຫມີ, ຍິ່ງກ່ວານັ້ນ ຄົນລາວຢູ່ຕ່າງປະເທດ ຍັງໄດ້ອັດໃສ່ກາແຊັດຟັງກັນ ແລະ ເຜີຍແຜ່ຫຼາຍສົມຄວນ.

ດັ່ງນັ້ນ ພວກເຮົາຈຶ່ງໄດ້ຍິນສຽງເພັງນີ້ ຢູ່ຫຼາຍປະເທດທີ່ມີຄົນລາວອາໄສຢູ່. ບາງທີກໍ່ໄດ້ຍິນເພັງນີ້ ຈາກຜູ້ຄົນຮ້ອງຕາມພູຜາ ຫຼື ຕາມທົ່ງນາ ຍາມແລງຈູງຄວາຍເຂົ້າບ້ານ, ເວລາພັດພາກຈາກບ້ານໄປຕ່າງແດນ ຢູ່ພາກອີສານຂອງໄທ,ຫວຽດນາມ, ຢູຣົບຕາເວັນອອກ ຫຼື ຕາເວັນຕົກ ຫຼືອາເມລິກາ. ໃນປີ 1960 ທຳນອງເພັງດອກຈຳປາກໍ່ໄດ້ຖືກອັດອອກເປັນແຜ່ນສຽງໂດຍຂ່າວສານ "ປະເທດລາວ" ເພື່ອເຜີຍແຜ່ຢ່າງກວ້າງຂວາງຢູ່ເຂດປົດປ່ອຍ ແລະ ຕ່າງປະເທດ... ຫວ່າງບໍ່ນານມານີ້ (ປີ 1992)

ທຳນອງເພັງ ຈຳປາເມືອງລາວ ກໍ່ໄດ້ຖືກບັນເລງເປັນເພັງປະກອບເຂົ້າໃນຟີມ ເອກະສານ ໂລກສະຫຼັບສີຂອງບໍລິສັດ "ປາຊີຟິກ ອິນເຕີຄອມມູນີເຄເຊິນ " ( Pacific Inter-Communication Co. LTD.) ທີ່ສ້າງອອກຈຳຫນ່າຍຢ່າງຫຼວງຫຼາຍ ກ່ຽວກັບສິລະປະວັດທະນະທຳ ແລະ ຄວາມສວຍງາມຮັ່ງມີຂອງປະເທດລາວ ໂດຍໃຫ້ຊື່ວ່າ "ອານາຈັກລ້ານຊ້າງ". ຟີມດັ່ງກ່າວຍາວເຖິງສອງຊົ່ວໂມງ ໄດ້ສາຍເອົາຫຼາຍສະຖານທີ່ປະຫວັດສາດ ສຳລັບການທ່ອງທ່ຽວໃນບາງແຂວງ ແລະ ເມືອງຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ບັນຍາກາດຄອບຄົວ ສິ່ງແວດລ້ອມ ສະພາບການບ້ານເມືອງ ແລະ ເຫດການໃນຊີວິດສ່ວນຕົວໄດ້ເປັນ ແມ່ແຮງຊຸກດັນໃຫ້ເກີດທວນໄຟດວງນ້ອຍໆ ໃນຈິດໃຈຂອງຄົນຜູ້ນີ້ ທີ່ເປັນຄົນມີຄວາມຮູ້ສຶກໄວ,ມີສິນທຳປະຈຳໃຈ,ມີຄວາມທະນົງໃຈທີ່ເກີດເປັນເຊື້ອຊາດລາວ, ແລະ ມີຍາດວົງພົງເຜົ່າ ເຫຼົ່າກໍ ສືບກັນມາໄດ້ຫຼາຍໆເຊັ່ນຄົນໃນດິນແດນແຜ່ນນີ້ທີ່ເອີ້ນວ່າ: ດິນແດນລ້ານຊ້າງ. ດັ່ງນັ້ນຢູ່ໃນ ເພັງດອກຈຳປານີ້ ໄດ້ສະແດງໃຫ້ເຫັນຄວາມຜູກພັນອັນດູດດື່ມ ກັບປະເທດຊາດ ອັນສະແດງອອກແຈ້ງ ແບບສັງລວມ ແລະ ໃນການປະພັນໄດ້ຢ່າງງົດງາມທີ່ສຸດ ແລະ ກໍ່ເປັນທີ່ຈັບໃຈຄົນລາວທັງຊາດ. ດັ່ງນັ້ນເພັງຂອງ ອຸຕະມະ ແຕ່ງອອກມາ ຈຶ່ງສະແດງອອກເຖິງມະໂນຈິດທີ່ບົ່ມຊ້ອນຢູ່ ຊ່ວງເລິກຂອງຫົວໃຈຕົນແຕ່ສິ່ງທີ່ໜ້າສັບລະເສີນ ແລະ ກາຍເປັນຄຸນຄ່າແຫ່ງສິລະປະວັດທະນະທຳ ແລະ ມໍຣະດົກອັນລ້ຳຄ່າຂອງລາວນັ້ນ ກໍ່ແມ່ນທ່ານສາມາດປັ້ນແຕ່ງແບບນິມິດອອກມາ ໃຫ້ຫຼາກຫຼາຍ, ເປັນຫຼາຍຮູບຮ່າງ ທີ່ມີຈິດວິນຍານຄວາມຮູ້ສຶກອັນເລິກເຊິ່ງ ບວກກັບອາລົມເພີນຈິດຂອງໄວໜຸ່ມໃນເນື້ອ ແລະ ທຳນອງເພັງອັນໄພເລາະສະເດາະຫູເຖິງໃຈ ຂອງຜູ້ຄົນທັງຫຼາຍ ແມ່ນແຕ່ຜູ້ບໍ່ເຂົ້າໃຈເນື້ອເລື່ອງຢ່າງເລິກເຊິ່ງ ແຕ່ກໍ່ຍັງຕ້ອງປະທັບໃຈດ້ວຍທຳນອງເພັງຕ່າງໆຂອງເພິ່ນ... ອັນນີ້ແມ່ນສິລະປິນແທ້.

ຄັ້ງໜຶ່ງ ທ່ານ ອີວານ ເຊດຣິບ ນັກສື່ຂ່າວໜັງສືພິມປຣາບດາ (Pravda) ໄດ້ຂຽນໄວ້ໃນປຶ້ມຫົວໜຶ່ງ ທີ່ພິມອອກໃນປີ 1976 ກ່ຽວກັບປະເທດລາວໂດຍໃຫ້ຊື່ວ່າ: " ສາທາລະນະລັດແດນຝັ່ງ ແມ່ນ້ຳຂອງ". ປຶ້ມດັ່ງກ່າວໄດ້ກ່າວ ເຖິງການປີ້ຽມຍາມປະເທດລາວ ຂອງນັກຂຽນເອງ ທີ່ໄດ້ພົບພໍ້ກັບບຸກຄົນສຳຄັນ ໃນຖັນແຖວປະຕິວັດຢູ່ເຂດປົດປ່ອຍເກົ່າໃນຊຸມປີ 1969-1973 ເວລາສົງຄາມກຳລັງດຸເດືອດ.

ໃນໜ້າທຳອິດ ຫຼັງຈາກໄດ້ພາດຫົວເລື່ອງວ່າ: "ປະ

ເທດລາວ ໄດ້ຮັບການປົດປ່ອຍແລ້ວ" ...ທ່ານຜູ້ນີ້ ໄດ້ຂຽນວ່າ ທ່ານຮູ້ຈັກກັບ ທ່ານ ອຸຕະມະ ແລະ ລູກສາວຄືແນວໃດ,? ແຕ່ ສິ່ງທີ່ໜ້າປະທັບໃຈ ກໍຄືທ່ານໄດ້ພັນລະນາຢ່າງຈິງໃຈວ່າ ແມ່ນ ຍ້ອນໄດ້ຟັງສຽງເພັງ ຈຳປາເມືອງລາວ ນີ້ແຫຼະ ທີ່ເປັນແຮງຈູງ ໃຈ ໃຫ້ທ່ານຮູ້ຈັກກັບເຈົ້າຂອງເພັງ. ຕໍ່ລຸ່ມນີ້ແມ່ນຄຳແປຈາກບົດ ຂຽນ ຂອງທ່ານ ອີວານ ເຊຼີບ. "ເວລານັ້ນເປັນຈັ່ງໃດ?"

<<ພວກເຮົາພົບກັນ ທີ່ໂຮງພະຍາບານແນວໜ້າແຫ່ງໜຶ່ງ ທີ່ຕັ້ງຢູ່ໃນຖ້ຳຂອງແຂວງຫົວພັນ ຫຼັງຈາກຢ້ຽມຢາມໂຮງພະຍາ ບານ ແລ້ວພວກເພິ່ນກໍ່ພາຂ້ອຍໄປຊົມການສະແດງ ສິລະປະ ສະໝັກຫຼິ້ນຂອງພະນັກງານແພດໝໍ. ເວລານັ້ນຢູ່ໄກໆຍັງໄດ້ຍິນ ສຽງຖິ້ມລະເບີດດັງສະໜັ່ນ ຂອງເຮືອບິນອາເມລິກາ. ຄື້ນສຽງ ກໍ່ສະທ້ອນມາເຖິງຫ້ອງນອນຄົນເຈັບ ທີ່ຢູ່ໃນຖ້ຳເລິກໆ ພ້ອມທັງມີ ກິ່ນຂີວໝື້ຂອງລະເບີດນາປານ ປິວເຂົ້າມາອີກ. ລະເບີດນັ້ນພາ ໃຫ້ຂີ້ຝຸ່ນ ແລະ ກ້ອນຫີນນ້ອຍໆຊຸລົ້ງມາຈົນໂຕເຈຽທີ່ຫ້ອຍເປັນພົ້ວ ເປັນພວງຢູ່ຕາມເພດານຫີນ ໃນຖ້ຳນັ້ນສັ່ນສະເທືອນ ແຕ່ວ່າການ ສະແດງສິລະປະດົນຕີກໍ່ຍັງສືບຕໍ່.ເຂົາເຈົ້າບັນເລັງເພັງ"ດອກຈຳ ປາ" ເພັງຍອດນິຍົມຂອງນັກຮົບປະຕິວັດ ດ້ວຍແຄນຫຼາຍດວງທີ່ ສົ່ງສຽງສຸດແສນອອນຊອນ.ບັນດານັກລົບຜູ້ກ້າຫານ ຊາວວຽງຈັນ ໄດ້ນຳເອົາເພັງນີ້ ມາຈາກແຄມຝັ່ງຂອງ ເພື່ອເປັນທີ່ລະລຶກແກ່ ບ້ານເກີດເມືອງນອນ ຕອນທີ່ມີສັນຕິພາບ ຊຶ່ງເຂົາເຈົ້າໄຝຝັນ ຢາກກັບຄືນເມືອ ແລະ ຢູ່ນີ້ເອງບົດເພັງດັ່ງກ່າວ ຖືກບັນເລັງຂຶ້ນ ກ້ອງກັງວານບໍ່ພຽງແຕ່ເພື່ອຄວາມຊົງຈຳ ແລະ ຄວາມອາໄລອາ ວອນຫາບ້ານເກີດເມືອງນອນ ທີ່ແສນຮັກເທົ່ານັ້ນ ແຕ່ຍັງເປັນຄຳ ປະຕິຍານວ່າ:ເຂົາເຈົ້າຈະຕ້ອງກັບຕ່າວຄືນເມືອ ດ້ວຍໄຊຊະນະ ເພື່ອສ້າງຊີວິດໃໝ່.ເວົ້າແທ້ກໍ່ແມ່ນທີ່ທົ່ງພຽງ ເຊິ່ງແວດລ້ອມໄປ ດ້ວຍພູຜານັ້ນເອງ, ແລະ ຕັ້ງແມ່ນບົດເພັງອັນແສນມ່ວນຫູ ແລະ ປະທັບໃຈນີ້ແຫຼະ ທີ່ດຶງດູດໃຫ້ຂ້ອຍເກີດມີຄວາມປາຖະໜາຢາກຮູ້

ກັບເຈົ້າຂອງຜູ້ປະພັນເພັງເປັນຢ່າງຫຍິ່ງຄື ທ່ານ ອຸຕະມະ. ໄກ ຈາກໂຮງພະຍາບານບໍພໍທໍ່ໃດ ກໍ່ແມ່ນຫ້ອງການສຶກສາ ຊຶ່ງ ທ່ານ ອຸຕະມະ ກໍ່ເປັນໜຶ່ງໃນບັນດາຜູ້ນຳພາຂະແໜ່ງນີ້.

"ຄອນເສີດ" (CONCERT) ປຸດຕິລົງແລ້ວ ແຕ່ສຽງ ໂຮຮ້ອງບັນເລີງເພັງ ຍັງກ້ອງສະໜັ່ນຕໍ່ໄປອີກຕາມ ຈັງຫວະທຳ ນອງເພັງ "ດອກຈຳປາ". ຈາກນັ້ນ ພວກທ່ານໝໍ ແລະ ນາງ ພະຍາບານທັງຫຼາຍ ກໍ່ພາກັນອອກມາລ່າຍລຳຟ້ອນລຳວົງຊຶ່ງແມ່ນ ການຟ້ອນລຳແບບປວງຊົນຊາດລາວ. ທ່ານ ອຸຕະມະໄດ້ເລົ່າໃຫ້ ຂ້ອຍຟັງວ່າ ຕັ້ງແຕ່ໜຸ່ມນ້ອຍພຸ້ນຄືປີ 1942 ໃນສະໄໝປະເທດ ລາວຍັງຢູ່ໃນແອກຄອບຄອງຂອງພວກລ່າເມືອງຂຶ້ນ ທ່ານໄດ້ແຕ່ງ ເພັງນີ້ ເຊິ່ງໄດ້ຮັບຄວາມນິຍົມຊົມຊອບ ຈາກມວນຊົນໃນທັນທີທັນ ໃດ.ຈາກນັ້ນ ຫຼາຍປີ,ຫຼາຍສິບປີຜ່ານມາ "ດອກຈຳປາ" ກໍ່ຍັງມີ ຊີວິດຢູ່ ແຕ່ເນື້ອເພັງກໍ່ຫາກມີການປ່ຽນແປງບາງເລັກນ້ອຍແລ້ວ ແຕ່ກາລະເວລາ. ທ່ານ ອຸຕະມະ ອ່ານເນື້ອຮ້ອງ ໃຫ້ຂ້ອຍຈົດ ເອົາເນື້ອປະຕິວັດຂອງເພັງດອກຈຳປາ ແລະກໍ່ແມ່ນເພັງນີ້ແຫລະ ທີ່ ໃນປີ 1975 ພວກນັກລົບຮັກຊາດ ທັງຫຼາຍໄດ້ຂັບຮ້ອງເພື່ອ ສະເຫຼີມສະຫລອງໄຊຊະນະ ໃນນະຄອນຫຼວງວຽງຈັນ ທີ່ໄດ້ຮັບ ການປົດປ່ອຍ ແລະ ບາດນີ້ຢູ່ແຄມຝັ່ງແມ່ນ້ຳຂອງ ສຽງເພັງທີ່ຄຸ້ນ ຫູໃນເມື່ອກ່ອນ ກໍ່ກັບຄືນມາດັງກ້ອງ ກັງວານບັນເລັງເປັນສຽງ ເພັງອ່ອນຊ້ອຍ ໃນດິນແດນບ້ານເກີດເມືອງນອນຂອງພວກເພິ່ນ ອີກຄືປາງກ່ອນ>>.

ທ່ານ ອີວານ ເຊດີຣບ ເວົ້າຖືກແລ້ວວ່າ ເພັງດອກຈຳ ປາໃນຍາມນັ້ນ ໄດ້ກາຍເປັນສັນຍາລັກ ແຫ່ງຄວາມຄິດຮອດຄິດ ເຖິງບ້ານເກີດເມືອງນອນ ແລະ ເປັນຄຳປະຕິຍານເຖິງຄວາມ ຈົງຮັກພັກດີຕໍ່ປະເທດຊາດ. ແມ່ນແທ້ວ່າ ພວກນັກລົບຮັກຊາດໄດ້ ເອົາຕິດຕົວໄປນຳແຕ່ແຄມຂອງ , ແຕ່ບໍ່ໄດ້ໝາຍຄວາມວ່າເພັງ ດອກຈຳປາ ໄດ້ຫາຍຈາກຫົວໃຈ ຂອງຜູ້ຄົນທັງຫຼາຍທີ່ຢູ່ໃນເຂດ

ລາຊະອານາຈັກໄປຈົນຫມົດສິ້ນ. ກົງກັນຂ້າມເພັງນີ້ກໍ່ຍັງຖືກຮັກສາໄວ້ຢ່າງເປັນທາງການ ດ້ວຍຄວາມທະນຸງໃຈ ແລະ ຍັງຖືກສົ່ງເສີມມາຕະຫຼອດ, ມີແຕ່ວ່າພວກເຂົາເຈົ້າ ບໍ່ເຄີຍໄດ້ເອີຍຊື່ຜູ້ແຕ່ງຈັກເທື່ອ. ຄັ້ງຫນຶ່ງ ເພັງນີ້ໄດ້ຖືກສົ່ງເຂົ້າແຂ່ງຂັນ ຢູ່ຕ່າງປະເທດ ແລະ ກໍ່ໄດ້ຮັບລາງວັນດີຫຼາຍ ແຕ່ເນື່ອງຈາກວ່າເວລານັ້ນ ຜູ້ແຕ່ງພວມເຄື່ອນໄຫວປະຕິວັດຢູ່ໃນກໍາລັງກູ້ຊາດເຊິ່ງລັດຖະບານ ຝ່າຍລາຊະອານາຈັກລາວ ຢູ່ທີ່ວຽງຈັນ ເຄີຍເອີ້ນວ່າເປັນຝ່າຍກະບົດ ຈຶ່ງບໍ່ສາມາດຈັດການມອບລາງວັນ ໃຫ້ຜູ້ແຕ່ງເພັງນີ້ໄດ້. ຕະຫຼອດໄລຍະເກືອບ 60 ປີ ເພັງຈໍາປາເມືອງລາວ ໄດ້ພັດທະນາໄປທັງຈັງຫວະ ແລະ ການໃຊ້ເຄື່ອງດົນຕີຣ ແທນທີ່ຈະໃຊ້ແຕ່ວີໂອລົງທີ່ມີແຕ່ສຽງອໍລະຊອນອ່ອນຊ້ອຍນັ້ນ ນັກເສບຍັງໃຊ້ເຄື່ອງດົນຕີຣຫຼາຍຊະນິດ ປະກອບເຂົ້າໃຫ້ມ່ວນຕື່ມອີກ.

ນອກນັ້ນ ນັກປະດິດຄິດແຕ່ງ ການຟ້ອນຍັງໄດ້ ອອກແບບລ່າຍລໍາຢ່າງງົດງາມ ໂດຍໃຊ້ທໍານອງເພັງຈໍາປາເມືອງລາວເປັນທໍານອງຫລັກ ໃນການຟ້ອນລວມຫມູ່. ສີງເກດໄດ້ຢ່າງເດັ່ນຊັດວ່າ" ບໍ່ວ່າໃນໂອກາດໃດ :ຮັບຕ້ອນແຂກລະດັບສູງສຸດພາຍໃນ ແລະ ຕ່າງປະເທດ,ງານມະໂຫລານຕ່າງໆ,ງານສ້າງຄອບຄົວ, ທຸກງສະຖານທີ່ບັນເທີງ ແລະບ່ອນມ່ວນຊື່ນຕ່າງໆ...ເພັງຈໍາປາເມືອງລາວ ໄດ້ຖືກບັນເລັງຢ່າງສະຫງ່າຜ່າເຜີຍ ຕະຫຼອດມາ ເພາະມັນຕັ້ງແມ່ນຫມາກຫົວໃຈ ຂອງຊາວລາວ ທັງຊາດ".

ສະຫລຸບແລ້ວເພັງດອກຈໍາປາ ຫຼື ຈໍາປາເມືອງ ລາວ ແມ່ນມີພະລັງແຮງທາງສິລະປະອັນສູງສົ່ງ ທີ່ສາມາດຄອບຄອງຫົວໃຈຂອງຄົນລາວທຸກຄົນ ບໍ່ວ່າຢູ່ຫົນແຫ່ງໃດ ພາຍໃຕ້ອຸດົມການ ແລະ ສະຖານະການໃດກໍ່ຕາມ ກໍ່ຍັງສາມາດຂ້າມຊາຍແດນການເມືອງ ແຫ່ງຄວາມເປັນປໍລະປັກ ລະຫວ່າງວິງຄະນະຍາດ ຂອງລາວສອງຝ່າຍ .ນອກນັ້ນກໍ່ຍັງສາມາດ ຂ້າມພົມແດນແຫ່ງສິລະປະວັດທະນະທໍາ, ພາສາ ແລະ ຂ້າມທະວີບໄປໄດ້ຢ່າງກ້ວາງໄກ.

<u>ເຕັກນິກໃນການປະພັນເພັງ</u>

ທັງໝົດ 6 ເພັງ ທີ່ທ່ານແຕ່ງຂຶ້ນຕິດຕໍ່ກັນໃນໄລຍະທີ່ 2 ນີ້ໄດ້ແບ່ງອອກເປັນສອງປະເພດເພັງໂດຍລະອຽດຄື: ເພັງທີ່ມີເນື້ອໃນເວົ້າເຖິງຄວາມຮັກລວມ ມີ 4 ເພັງ ແລະປະເພດເດີມ ມີ 2 ເພັງ. ເມື່ອສັງເກດແລ້ວ ເຫັນວ່າເພັງຂອງທ່ານມີຄວາມມົ່ງມູນສົມບູນ ແລະ ໄດ້ມາດຖານທາງດ້ານເຕັກນິກ ຂອງການແຕ່ງ ແບບອາຊີບຄືຮູ້ໝູນໃຊ້ທັງ 8 ພະຫານະຊໍ່ສະແດງອັນເປັນພື້ນຖານຕົ້ນຕໍຂອງດົນຕີຣດັ່ງ: ທຳນອງ, ຈັງຫວະ, ການປະສານສຽງ, ກົດໝູນວຽນຂອງບາດຕີໜັກແລະເບົາ, ຄວາມໄວ, ສີສັນ, ຂອບເຂດ ແລະ ຄວາມກ້ອງຂອງສຽງ ປະສານສົມທົບກັບເນື້ອຮ້ອງແບບໃນຕົວ ຫຼັກແຫຼມແຍບຍົນພໍສົມຄວນ. ໜຶ່ງໃນບັນດາພະຫານະ ຊໍ່ສະແດງທີ່ເດັ່ນຊັດຂຶ້ນກ່ວາໝູ່ ຍັງຄົງແມ່ນທຳນອງ. ທຳນອງເພັງຂອງທ່ານອ່ອນຊ້ອຍໄສມສີຂຶ້ນລົງຮຽບງ່າຍ ປະສານກັບຈັງຫວະຕັງໂກ (TANGO) ຕາມອາລົມຈິດເລີດໂລກ

ທຳນອງເພັງ "ຈຳປາເມືອງລາວ"



ໂຄງຮ່າງປະກອບສ້າງ ເປັນທຳນອງສະໄຫວ ໂດຍອີງຕາມກົດເກນທາງທຳມະຊາດ ທັງມີລັກສະນະຊາດ ທີ່ເຂົ້າແກັບເຂົ້າເກຍກັນດີ: ທຳນອງສ່ວນໃຫຍ່ນຳໃຊ້ໃນແມ່ຫຼາຍໄລຍະສຽງລ່ອງທັງ 3 ປະເພດ ແລະ ໄລຍະສຽງອັດ (ຕາມການຈັດປະເພດຂອງດົນຕີຣສາກົນ) ເຊັ່ນ:

1. <u>ໄລຍະສຽງລ່ອງທີ່ສຸດ</u>: ຄືໄລຍະ 1 ຖືກແລະ 8 ຖືກ

ທຳນອງເພັງ "ຈຳປາເມືອງລາວ"



ໄລຍະ 1 ຖືກ-ໂນດຊອນ-ໂນດສຽງຂັ້ນ V ທີ່ມີຄວາມສະຫວ່າງຂອງສຽງໂດໃຫຍ່ " C-dur " ຕອນນີ້ຍັງເໝືອນໂນດສຽງທີ່ມີຮູບສຽງດຽວກັນ ເພື່ອກໍ່ຄວາມຮູ້ສຶກ ທີ່ໝາຍໄວ້ເປັນຮອຍໃນ ຄວາມຄິດຄວາມຊົງຈຳແກ່ທ່ານຜູ້ຟັງ.

2. <u>ໄລຍະສຽງລ່ອງທຳມະດາ</u>: ດັ່ງໄລຍະ 4,5 ຖືກ (ໄລຍະສຽງ ທີ່ໃກ້ກັບໄລຍະສຽງທາງສຳນຽງໃນພາສາຄຳເວົ້າຂອງຄົນລາວເຮົາໄດ້ ທ່ານເອົາໃຈ ໃສ່ເປັນພິເສດ ແລະ ໝູນໃຊ້ຫຼາຍໃນທຳນອງ).

ທຳນອງເພັງ "ເດັດດອກຮັກ"




3. <u>ໄລຍະສຽງບໍ່ທຳມະດາ</u>: ໄລຍະສຽງ 6 ນ້ອຍທີ່ມີຄວາມແຈ່ມແຈ້ງ ເພື່ອສ້າງຄວາມປະທັບໃຈ ແລະວາດພາບເຖິງທຳມະຊາດທີ່ສວຍງາມ ດັ່ງດວງເດືອນ ພວມເປັ່ງແສງປະກາຍລົງສູ່ພູມລຳເນົາ ໃນບັນຍາກາດເຍືອກເຢັນ ງຽບເຫງົາຂອງລະດູໜາວ.

ເພັງ "ເດືອນຫງາຍຍາມໜາວ"



4. <u>ໄລຍະສຽງອັດ</u>: ຄືໄລຍະ 2 ນ້ອຍ 2 ໃຫຍ່ເພື່ອແກ້ໄຂບາດເຕັ້ນຂອງໄລຍະສຽງຕ່າງໆ ໄປຕາມທິດກົງກັນຂ້າມ ຊຶ່ງເປັນເຕັກນິກຢ່າງໜຶ່ງ ໃນການບຸລະນະ ແລະ ພັດທະນາທຳນອງ ຢູ່ໃນຄວາມດຸ່ນດ່ຽງ.

ທຳນອງເພັງ "ເດັດດອກຮັກ"



ພິເສດແມ່ນການນຳໃຊ້ໄລຍະ 7 ນ້ອຍ ຊຶ່ງເປັນໄລຍະສຽງອັດ ທີ່ບໍ່ນິຍົມກັນໃຊ້ ໃນການປະສານສຽງຂອງດົນຕີຣສາກົນ ແຕ່ທ່ານໃຊ້ຢ່າງມີຫົວຄິດປະດິດສ້າງ ຈຶ່ງເຮັດໃຫ້ໄລຍະສຽງອັດດັ່ງກ່າວ ຟັງສະດວກສະບາຍ ເໝືອນໄລຍະສຽງລ່ອງລາວທຳມະດາ.

ທຳນອງເພັງ "ເດັດດອກຮັກ"



ຄຽງຄູ່ກັບໄລຍະສຽງ ທ່ານເອົາໃຈໃສ່ຕໍ່ການເຍື່ອນສຽງ ເພື່ອແກ່ຍາວສຽງເພີ່ມເຕີມຕາມລາງ:
ໂດຍອີງໃສ່ກົດໝູນວຽນ ລະຫວ່າງບາດຕີໜັກ ແລະ ບາດຕີເບົາ ຢ່າງສົມເຫດສົມຜົນ ແລະ ມີບາງຄັ້ງກໍເກີດມີວິທີເນັ້ນສຽງແບບອັດຈັງຫວະ (SYNCOPE) ຂຶ້ນໃນທຳນອງ

ທຳນອງເພັງ "ໃນຕາບອກ"



ທຳນອງນຳໃຊ້ທັງ 2 ແບບ(MODE) 5 ສຽງ ຊຶ່ງເປັນຕົວແບບຂອງດົນຕີຣພື້ນເມືອງລາວ ແລະ 7 ສຽງຂອງດົນຕີຣສາກົນ ແຕ່ການດຳເນີນທຳນອງ ພັດຖືລັກສະນະຊາດເປັນສຳຄັນ ພະຍາຍາມຫຼີກລຽງ ບັນດາໂນດສຽງ ສຳພັນລ່ຽນກັນທັງ 4 (Tretracosde) ທີ່ທຳນອງສາກົນມັກໃຊ້ຫຼາຍ ດ້ວຍວິທີການຫລຸດຜ່ອນ ແລະ ປ່ຽນແປງໃນຕົວ. ຕົວຢ່າງ:

ທຳນອງເພັງສາກົນ



ທຳນອງເພັງລາວ

ເພັງ "ຈຳປາເມືອງລາວ"



ໂນດໂດ (C) ແທນທີ່ເປັນບາດຕີໜັກ ແລະ ເປັນໂນດກົກຂອງບັນດາໂນດສຽງສຳພັນລຽນກັນທັງ 4 ແຕ່ຕອນນີ້ ພັດຖືກໂນດສຽງກ່ອນ ດຶງດູດດ້ວຍວິທີການເຍື້ອນສຽງ ເຮັດໃຫ້ຈຸດເນັ້ນຂອງໂນດສຽງດັ່ງກ່າວ ຖືກສະຫຼາຍໄປໃນຕົວ. ຈຶ່ງບ່ອນໃຫ້ໂນດຊີ (B) ໂນດຖັດຈາກນັ້ນ (ຊຶ່ງເປັນບາດເບົາ) ດຳລົງຕຳແໜ່ງຄ້າຍຄື ບາດໜັກ (ໂນດຂຶ້ນກ່ອນ TRETRACOSDE) ໃນເພັງ "ເດືອນງາມຍາມໜາວ" ກໍເໝືອນກັນບໍ່ພຽງແຕ່ໃຊ້

"TRETRACOSDE" ຍັງກ້າຫານໃຊ້ໄລຍະ 2 ນ້ອຍ ຕາມທິດຂຶ້ນໄປຕື່ມ ເພື່ອພັນລະນາເນື້ອຫາດົນຕີຣ ທີ່ມີຄວາມເຍືອກເຢັນຂອງຄໍ່າຄືນເດືອນເພັງ. ໂນດສຽງຂັ້ນ VII ນໍາຂຶ້ນເຄິ່ງຂັ້ນ (ໄລຍະ 2 ນ້ອຍ) ຟັງສະດວກເໝືອນດັ່ງໄລຍະສຽງລ່ອງລາວແບບທໍາມະຊາດ ເຖິງຈະເປັນໄລຍະສຽງຂັດ ທີ່ມີລັກສະນະເປັນຕົວຢ່າງ ໃຫ້ແກ່ດົນຕີຣສາກົນກໍ່ຕາມ. ນີ້ກໍເປັນການໝູນໃຊ້ແບບຄາຍຢ່າງໜຶ່ງ ໃນການສົມທົບທີ່ເຕັມໄປດ້ວຍຄວາມປີຊາສາມາດຂອງນັກປະດິດຄິດແຕ່ງ ຜູ້ໂດດເດັ່ນຄືດັ່ງທ່ານ ນອກນັ້ນ ທໍານອງຍັງໄດ້ເສີມສ້າງດ້ວຍຫຼາຍຮູບສຽງ ໂນດສຽງ ດັ່ງທີ່ເຄີຍເອີ້ນກັນວ່າ (ໂນດດອກໄມ້): ໂນດດໍາ 1 ຂີດ " ♪ " ໂນດດໍາ 2 ຂີດ " ♬ "...ເພື່ອປະດັບເອ້ຄວາມສົດໃສ ອ່ອນນີ້ມແບບພື້ນບ້ານ.

ທໍານອງເພັງ "ເດັດດອກຮັກ"



ວິທີດັ່ງກ່າວ ຖືກສະທ້ອນໂດຍກົງຈາກພື້ນຖານຂອງດົນຕີຣພື້ນເມືອງ ທີ່ເຄີຍມີມູນເຊື້ອແຕ່ດຶກດໍາບັນ. ທຸກເພັງທີ່ທ່ານແຕ່ງມີຄວາມເອກະພາບກັນ ທາງດ້ານຫຼັກສຽງ (Tonalite)ໃຫຍ່ ຫຼື ໃຫຍ່ນ້ອຍປົນເປຊຶ່ງກັນແລະກັນ ເພັງມີເນື້ອໃນອ່ອນຫວານແຕ່ພັດຢູ່ໃນບັນດາການສຽງດັ່ງກ່າວ ເປັນວິທີການຢ່າງໜຶ່ງໃນການປະດິດຄິດແຕ່ງຂອງທ່ານ ທີ່ເຮັດໃຫ້ເພັງ ເວົ້າເຖິງຄວາມຮັກແຕ່ບໍ່ອ່ອນແອເກີນໄປ ເມື່ອເວົ້າເຖິງການປົກປັກສັນຕິພາບ ຍິ່ງເພີ່ມເຕີມສີສັນຂອງຄວາມກ້າແກ່ນໃນຕົວ.

ເປັນອັນວ່າ ວິເສດເໝືອກວ່າໝູ່ໃນເພັງ "ເດືອນງາມ

ຍາມໜາວ" ຜູ້ແຕ່ງບໍ່ສະເພາະວາດພາບພົ້ນເດັ່ນ ທຳມະຊາດທີ່ສວຍງາມຂອງຄືນເດືອນເພັງໃນລະດູໜາວ ທີ່ເປືອກເປັນງຽບເຫງົາ ດ້ວຍການໃຊ້ໄລຍະສຽງນ້ອຍ ແລະ ວິທີດຳເນີນທຳນອງແບບສາກົນຄືໃຊ້ຫຼາຍ (Tre tracosde) ທີ່ມີການປ່ຽນແປງຫາກຍັງສາມາດເລືອກເຟັ້ນການສຽງ ທີ່ເໝາະສົມກັບເນື້ອຫາດົນຕີຣ ທີ່ຕົນໄດ້ນຶກຄິດໄວ້ຄື ການສຽງຟາໃຫ່ຍ (F-dur). ການສຽງຟາໃຫ່ຍ ເປັນທີ່ນິຍົມໃຊ້ເພື່ອແຕ່ງເພັງ ເວົ້າເຖິງທຳມະຊາດລ້ວນງຂອງບັນດານັກດົນຕີຣໂດ່ງດັງໃນໂລກ ເພາະເຂົາເຈົ້າຖືວ່າ ການສຽງດັ່ງກ່າວມີສີສັນຂອງທຳມະຊາດໃນຕົວຢູ່ແລ້ວ ຖ້າເຮົາຮູ້ໜູນໃຊ້ ເຂົ້າບົດປະພັນເພັງຂອງຕົນ ຈະເຮັດໃຫ້ມີຄວາມບັນລຸຜົນຢ່າງແນ່ນອນ. ດັ່ງບົດປະພັນດົນຕີຣໂດ່ງດັງ ຂອງລຸດວິດວານ ເບັດໂທແວັນ (Ludwig Van Beethoven)

- ຊິມໂຟນີ (SYMPHONY) ນຳເບີ 6 ໃຫ້ຊື່ວ່າ "ບ້ານນອກ (Symphony Number 6 F-dur)"
- ໂຊນາຕາ(SONATA) ນຳເບີ 5 ຂຽນໃຫ້ ວິໂອລິງ "(Sonata Namber 5 F-dur)"

ຖັດຈາກທຳນອງ ແມ່ນຈັງຫວະ ພາຫະນະ ທີ່ ທ່ານເຄີຍຖື ເປັນວິນຍານຂອງບົດເພັງຕ່າງໆມາໂດຍຕະຫຼອດ. ຈັງຫວະໃນເພັງ "ປົກປັກສັນຕິພາບ" ເປັນຈັງຫວະເດີນ 2/4 ທີ່ເຂັ້ມແຂງຈຸດເໜັ້ນຕ່າງໆ ທີ່ມີຄວາມແທດເໝາະກັບເນື້ອຮ້ອງ (ແຕ່ລະຄຳເວົ້າແຕ່ລະປະໂຫຍກ) ຕອນນີ້ຍັງມີຄວາມສາມາດໃຊ້ເພື່ອການເຄື່ອນທັບ (ສວນສະໜາມ) ຢ່າງໃຫ່ຍໂຕມະໂຫຖານໄດ້ເປັນຢ່າງດີ.

ທຳນອງເພັງ "ປົກປັກສັນຕິພາບ"



ຄຸນທາດຂອງດົນຕີຣ ແບບທີ່ຣຄວາມບັນດາວັກ , ທ່ອນ ຫຼື ປະໂຫຍກເພັງ ສ່ວນຫຼາຍໃຊ້ວິທີລອກແບບ ແລະ ຂະຫຣາຍໂດຍ ອີງຕາມໂນດພາບສຽງ (LEPMOTIP) ຂອງວັກສຽງທຳອິດທີ່ ເປັນຕົວແບບ.

ທຳນອງເພັງ "ປົກປັກສັນຕິພາບ"



ເພັງທີ່ທ່ານແຕ່ງບໍ່ຍືດຍາວ , ບາງເພັງມີເນື້ອໃນເວົ້າ ເຖິງຄວາມຮັກຄືເພັງ "ຈຳປາເມືອງລາວ" ທີ່ໄດ້ມາດຖານມີ ພຽງແຕ່ 23 ຫ້ອງຈັງຫວະເທົ່ານັ້ນ. ເພັງ " ເດືອນງາມ ຍາມໜາວ " 24, ເພັງ "ເດັດດອກຮັກ" 20 ຫ້ອງຈັງຫວະ ແຕ່ພັດໄດ້ລື້ມໄປລື້ມມາ ຕັ້ງເປັນ 3 ເທື່ອແລະອື່ນໆ... ສ່ວນ ທາງດ້ານຂອບເຂດສຽງທຳນອງເວົ້າລວມບໍ່ເກີນກວ່າໄລຍະ 11 ຊຶ່ງເປັນຂອບເຂດສຽງທີ່ຮ້ອງງ່າຍ (ເພາະມັນຈະບໍ່ສູງ ແລະ ຕໍ່າໂພດເມື່ອທຽບຕາມສຽງທຳມະຊາດທີ່ຄົນເຮົາ ມີມາແຕ່ຕອນ ກຳເນີດ) ຈຶ່ງເປັນເຫດຜົນຢ່າງໜຶ່ງທີ່ພາໃຫ້ເພັງ ຂອງທ່ານ ແຜ່ລາມສູ່ມະຫາຊົນໃນທຸກຂົງເຂດ ຢ່າງກວ້າງຂວາງ.

ທຳນອງເພັງ "ຈຳປາເມືອງລາວ"




ນອກນັ້ນທ່ານຍັງໄດ້ນຳໃຊ້ຫຼາຍຮູບການດົນຕີຣ ທີ່ເຫັນວ່າ ມີຄວາມແທດເໝາະກັບເນື້ອຫາ ຂອງແຕ່ລະເພັງທີ່ແຕກຕ່າງຄື : ເພັງຈຳປາເມືອງລາວ ເປັນເພັງ ທີ່ມີລັກສະນະກາລາຊິກສາກົນ ແລະ ພື້ນເມືອງຈະແຈ້ງ ໂຄງຮ່າງປະກອບສ້າງ ທັງດ້ານຮູບ ການດົນຕີຣ 1 ຕອນດຽວ ຊຶ່ງລວມມີ 5 ປະໂຫຍກ. ປະໂຫຍກ

ທີ່ 5 ໄດ້ຖືເປັນປະໂຫຍກມ້ວນທ້າຍຂອງເພັງ ຊຶ່ງອັດທ້າຍດ້ວຍໂນດຄົງທີ່ (ໂນດແມ່ບົດ) ຂອງແບບ (Mode) ອາດເວົ້າໄດ້ວ່າ ເພັງ " ຈຳປາເມືອງລາວ " ແມ່ນການປະສານສົມທົບ ທີ່ເຫມາະສົມ ແລະ ປານິດ ລະຫວ່າງ 2 ແບບ 7 ສຽງໃຫຍ່ ຊຶ່ງເປັນຕົວແບບຂອງດົນຕີຣສາກົນ ແລະ 5 ສຽງນ້ອຍ ຊຶ່ງເປັນຕົວແບບຂອງດົນຕີຣພື້ນເມືອງລາວ.



ປະກົດການ ຂອງການປ່ຽນລະບົບ "METABOLE" ແບບນີ້ ເຄີຍພົບພໍ້ຫຼາຍ ໃນທຳນອງເພັງພື້ນເມືອງລາວ ຂອງບັນດາເຜົ່າຕ່າງໆໃນລາວ ເພັງ "ໃນຕາບອກ" ຂຽນຢູ່ໃນຮູບການດົນຕີຣ 2 ຕອນດ່ຽວ ມີການລອກແບບບໍ່ປົກກະຕິ. ຕອນກັບຄືນມີລັກສະນະຂອງຄວາມຂະຫຍາຍເພື່ອອັດທ້າຍ. 18 ຫ້ອງຈັງຫວະທຳອິດ ແມ່ນຕອນທີ່ໜຶ່ງ (A) ຕອນທີ່ສອງ (B) ເລີ້ມແຕ່ຫ້ອງຈັງຫວະທີ່ 19 ຈົນສຸດ ຫ້ອງຈັງຫວະ 35 ໄດ້ເປັນຈັງຫວະຕື່ມຂອງການລອກແບບຄືນ. ຢູ່ທີ່ນີ້ຜູ້ແຕ່ງໄດ້ເອົາຄຸນທາດດົນຕີຣ ປະໂຫຍກທີ່ 2 ຂອງຕອນທີ່ 1 (A) ມາເປັນການລອກແບບຄືນໂດຍມີການປ່ຽນແປງຈັງຫວະ

 

ເມື່ອເວົ້າເຖິງແບບ (Mode) ເພັງ "ໃນຕາບອກ" ມີການປະສານສົມທົບ ລະຫວ່າງແບບ 7 ສຽງຂອງສາກົນ ແລະ 5 ສຽງພື້ນເມືອງລາວ ເຊິ່ງເອີ້ນວ່າ "METABOLE" ຕາມລາງ: Cdefgahc —— dfgac.



ເພັງ "ເດືອນງາມຍາມໜາວ" ມີໂຄງຮ່າງປະກອບ ແລະ ການຂະຫຍາຍດົນຕີຣ ຄ້າຍຄືເພັງ "ຈຳປາເມືອງລາວ" ທັງໝົດບົດເພັງໄດ້ຂຽນດ້ວຍຮູບການດົນຕີຣ 1 ຕອນດ່ຽວ ຊຶ່ງປະກອບດ້ວຍ 4 ປະໂຫຍກ ບໍ່ສະໝ່ຳສະເໝີປະໂຫຍກທີ່ 1 ມີ 5 ທ້ອງຈັງຫວະ ອັດທ້າຍດ້ວຍໂນດຟາ (F) ປະໂຫຍກທີ່ສອງ 7 ທ້ອງຈັງຫວະ ອັດທ້າຍດ້ວຍໂນດເຣ (D) ປະໂຫຍກທີ່ 3 ມີ 5 ທ້ອງຈັງຫວະ ອັດທ້າຍດ້ວຍໂນດລາ (A) ແລະ ປະໂຫຍກທີ່ສີ່ ມີ 7 ທ້ອງຈັງຫວະ ອັດທ້າຍດ້ວຍໂນດແມ່ບົດໂນດຟາ (F) ບົດເພັງນີ້ໃຊ້ວິທີການພັດປ່ຽນ 2 ແບບ 5 ສຽງໃຫຍ່ ແລະນ້ອຍ ດັ່ງການສຽງຟາໃຫຍ່ ແລະ ເຣນ້ອຍ.



ເພັງນີ້ພິເສດກ່ວາໝູ່ ເພາະມີການປະກົດຕົວຂອງສອງໂນດສຽງ ຊີ (B) ແລະ ມີ(E) ຊຶ່ງບໍ່ນອນໃນແບບ ສອງໂນດດັ່ງ ກ່າວ ພຽງແຕ່ປະກົດຕົວ ດ້ວຍລັກສະນະ ສ້າງໃຫ້ມີຄວາມດຶງດູດສຽງເທົ່ານັ້ນ ຄືໂນດຊີ ຖືກດູດ ເມື່ອໂດແລະໂນດມີຖືກດູດເມື່ອຫາເຣ.

ເພັງ "ເດັດດອກຮັກ" ນຳໃຊ້ພື້ນຖານ ຂອງຮູບການດົນຕີຣ 2 ຕອນດ່ຽວ(AB) ເພື່ອຂະຫຍາຍຕົວເປັນຮູບການໃໝ່ຕາມລາງ ABA'B'. ເມື່ອຫຼຽວເບິ່ງລາງດັ່ງກ່າວ ພວກເຮົາປະກົດເຫັນພາບພົດ ຂອງຮູບການດົນຕີຣຣົງໂດ (Rondo) ແຕ່

ໃນຕົວຈິງແລ້ວແມ່ນບໍ່ສາມາດເປັນຣີງໂດດັ່ງເດີມໄດ້ ມັນພຽງແຕ່ເປັນຮູບການ 2 ຕອນ ຊຶ່ງແຕ່ລະຕອນມີການລື້ມຄືນ ດ້ວຍວິທີຂະຫຍາຍ ແລະປ່ຽນແປງຄຸນທາດດົນຕີຣ ທາງດ້ານແບບຫມູນໃຊ້ 2 ແບບ 5 ສຽງໃຫຍ່ (Dur) ແລະ ນ້ອຍ (Moll).



ການປະກົດຕົວຂອງໂນດຟາ ພຽງແຕ່ມີລັກສະນະໂນດສຽງ ຖືກດູດເມື່ອຫາໂນດຊອນເທົ່ານັ້ນ ມັນບໍ່ມີຄວາມຫມາຍເຕັມສ່ວນໃນລະບົບຂອງແບບ.

ເພງ "ປົກປັກສັນຕິພາບ" ດ້ວຍຮູບການ 3 ຕອນ (ABC) ຕອນທີ່ 3 ມີລັກສະນະຂະຫຍາຍຕໍ່ ເພື່ອໃຊ້ມ້ວນທ້າຍເພງ. ຮູບການນີ້ບໍ່ສູ້ພົບພໍ້ໃນດົນຕີຣເອີຣົບ ທັງ 3 ຕອນ ອັດທ້າຍດ້ວຍໂນດສຽງແມ່ບົດໂນດໂດ. ເມື່ອເວົ້າເຖິງແບບ ເພງນີ້ໄດ້ກໍ່ສ້າງບົນການສຽງໂດໃຫຍ່ (C-dur) ຂອງການປະສານສຽງເອີຣົບ.ແຕ່ຢູ່ທີ່ຈັງຫວະ 18,19,27, ແລະ 28 ກໍ່ປະກົດມີການນຳໃຊ້ວິທີການປ່ຽນລະບົບ "METABOLE" ມາຫາແບບ 5 ສຽງໃຫຍ່ (Fgacd) ຕາມເຄີຍ.

ລວມຄວາມແລ້ວເພງທີ່ທ່ານແຕ່ງທັງ 6 ເມື່ອໄດ້ຟັງແລ້ວກໍ່ຢາກຟັງອີກ ເພາະມັນມີທາດມູນ (Element) ທາງດ້ານຮູບນຶກ ຂອງດົນຕີຣພື້ນເມືອງປົນເປຢູ່. ເພງເກີດຈາກອາລົມຈິດຂອງຜູ້ຄົນ ທີ່ບໍ່ມີໂອກາດໄດ້ສຶກສາຮ່ຳຮຽນ ຫຼື ຍົກລະດັບຄວາມຮູ້ທາງດ້ານວິຊາຊີບຢູ່ຕາມວິທະຍາລານດົນຕີຣແຫ່ງຕ່າງໆ ແຕ່ດ້ວຍຫມາກຫົວໃຈຮັກເຜົ່າພັນແພງເຊື້ອ ຟົດຟື້ນປະຕິວັດ ແລະ ດ້ວຍຄວາມຮັກມັກດົນຕີຣຢ່າງສຸດຊຶ້ງທ່ານ ອຸຕະມະ ຍາມໃດກໍ່ສະແດງໃຫ້ເຫັນເຖິງ ຄວາມສາມາດອັນໂດດເດັ່ນຂອງນັກດົນຕີຣອາຊີບ

ຄົນຫນຶ່ງ ທີ່ມີຄວາມຂະຫຍັນ ກຽມພ້ອມ ແລະ ຮັບໃຊ້ຊາດຢ່າງ ສຸດໃຈ. ບົດຮຽນ ແລະ ປະສົບການ ໃນພາລະກິດ ການປະດິດ ແຕ່ງຂອງທ່ານແມ່ນ ຢູ່ກັບສະພາບຕົວຈິງຄື ມັນຕິດພັນກັບການ ດຳລົງຊີວິດປະຈຳວັນ ...ການອອກແຮງງານກໍ່ຄືການປົກປັກຮັກ ສາປະເທດຊາດຂອງປວງຊົນລາວທັງຊາດ.

ດ້ວຍຮູບການແຕ່ງທີ່ກະທັດລັດ ເນື້ອນາງມີຫົວມີຫາງ ຊຶ່ງ ໃກ້ກັບພື້ນຖານຄົນເຮົາ ທີ່ເປັນມູນເຊື້ອຂອງລາວນຳໃຊ້ຢ່າງສຸດຂີດ ແລະ ເຖິງຖອາຍອດຍິ່ງ ວັດທະນະທຳໂລກເພື່ອກະຕຸກຊຸກຍູ້ຊ່ອຍ ຊູຍູ້ຫນູນ ແລະ ຍົກສູງຖານະບົດບາດ ຂອງດົນຕີພື້ນເມືອງ ໂດຍ ຜ່ານແບບ, ຫຼັກສຽງ, ການສຽງ, ຮູບການດົນຕີກໍ່ຄືບັນດາໂຄງ ປະກອບທຳນອງທີ່ມີຄວາມອ່ອນຊອນ ເຖິງຈະດຽວດາຍ ແຕ່ຫາກ ມີເອກະລັກພິເສດ ຊໍ່ສະແດງຄວາມຄິດໃນໃຈ ຂອງຄົນລາວຢ່າງ ພົ້ນເດັ່ນ.

ນອກນີ້ທ່ານ ອຸຕະມະ ຍັງເປັນບຸກຄົນທຳອິດທີ່ໄດ້ບຸກເບີກ ແລະ ສ້າງສຳເລັດລັກສະນະອອນຊອນຂອງເພັງ ຢູ່ໃນແຕ່ລະບົດ ເພັງດ້ວຍວິທີ ທີ່ມີຫົວຄິດປະດິດສ້າງ ປະກອບດ້ວຍຄວາມມົ່ງມູນ ແລະ ແຈບອີກແຈບໃຈທີ່ສຸດ. ກ່ຽວກັບຊຸມເພັງດັ່ງກ່າວ ໂດຍສະ ເພາະແມ່ນເພັງ "ຈຳປາເມືອງລາວ" ທ່ານ ສົມແລ້ວທີ່ເປັນວີ ລະບຸລຸດຂອງວົງການເພັງແຫ່ງດິນແດນລ້ານຊ້າງທີ່ລືນາມ.

xxx

ນອກຈາກການແຕ່ງເພັງ ທ່ານຍັງກາຍເປັນຕົວ ລະຄອນ ເອກໃນຫຼາຍບົດລະຄອນ ທີ່ມີເນື້ອໃນເຢາະເຢີ້ຍກຽດຊັງອຳນາດ ການປົກຄອງ ຂອງພວກລ່າເມືອງຂຶ້ນຜູ້ຄອບຄອງ. ບົດລະຄອນ ດັ່ງກ່າວທີ່ຫຼາຍຄົນນິຍົມຊົມຊອບມີຊື່ວ່າ: " ອຳນາດໃນງານບຸນ" ແລະ "ບ້າຍົດ" ເປັນຕົ້ນ. ສຳລັບບົດ "ອຳນາດໃນງານບຸນ" ຊຶ່ງສະແດງອອກສູ່ສາຍຕາມະຫາຊົນໃນ ປີ 1939 ມີເນື້ອໃນ ເລົ່າເຖິງເຫດການທີ່ ເຈົ້ານາຍຈໍ້ໃຊ້ສິດອຳນາດສ່ວນຕົວ ແບບຜະ

ເດັດການໃນງານບຸນຄີ: ຢາກໄດ້ອັນໃດຢາກເຮັດຫຍັງກໍ່ເຮັດໄປໂລດ, ຢາກເອົາຜູ້ສາວໃດມາເປັນເມຍ ກໍ່ບັງຄັບເອົາໄດ້ ໂດຍບໍ່ຄຳນຶງເຖິງຜົນເສຍຫາຍແຕ່ຢ່າງໃດ. ເບິ່ງລວມແລ້ວບົດລະຄອນນີ້ ຊໍ່ສະແດງໃຫ້ເຫັນຢ່າງເດັ່ນຊັດເຖິງທາດແທ້ຂອງພວກປົກຄອງນິວເນົານຳແຕ່ອຳນາດບາດໃຫ່ຍ ແລະ ສິດພິເສດ ໂດຍຖືເອົາຜົນປະໂຫຍດສ່ວນຕົວສູງກວ່າສິ່ງໃດໝົດ. ລະຄອນປະເພດນີ້ຖືກກັບແນວຄິດຈິດໃຈຂອງ ທ່ານ ອຸຕະມະ ສະນັ້ນເພິ່ນຈຶ່ງສະແດງໄດ້ດີ ແລະ ເຕັມຈິດເຕັມໃຈ ປານວ່າແມ່ນນັກສະແດງອາຊີບ. ບັນດາທ່ານທີ່ໄດ້ປະກອບສ່ວນ ສະແດງລະຄອນນຳກັນ ສ່ວນຫຼາຍໄດ້ເສຍຊີວິດໄປໝົດແລ້ວ ຍັງຢູ່ແຕ່ທ່ານ ອຸ່ນເນື້ອ ທ່ານ ຫນູຜາດ ນາງ ສີຟອງ ແລະ ນາງ ກົງແສງ ຊຶ່ງພວກເພິ່ນຈະຕ້ອງຈົດຈຳໄດ້ດີເຖິງຄຸນປະໂຫຍດຂອງບົດ ເຊິ່ງມີຄວາມໝາຍສຳຄັນ.

ຊຸມບົດລະຄອນດັ່ງກ່າວ ມາເຖິງປະຈຸບັນນີ້ ຍັງຄົງຈາລຶກໄວ້ໃນຄວາມຊົງຈຳ ຂອງເຖົ້າແກ່ອາວຸໂສຢູ່ ເພາະມັນໄດ້ເປັນບົດທີ່ແຕ່ງຂຶ້ນໄດ້ຍາກໃນໄລຍະນັ້ນ. ພວກເຮົາຈຳໄດ້ວ່າຜູ້ນຳພາ ແລະ ກຳກັບການສະແດງແມ່ນ ທ່ານ ດຣ. ທອງດີ ສູນທອນວິຈິດ ຊຶ່ງເພິ່ນເອງກໍ່ເປັນນັກປະພັນເພງຜູ້ໜຶ່ງທີ່ດີເດັ່ນເໝືອນກັນ

XXXX

ປີ 1945 ແມ່ນປີທີ່ທ່ານໄດ້ຕັດສິນໃຈອອກຈາກຄອບຄົວກໍ່ຄື ນະຄອນວຽງຈັນ ເພື່ອເຂົ້າຮ່ວມຖັນແຖວຂອງການປະຕິວັດ ແລະ ດຳເນີນການຕໍ່ສູ້ກອບກູ້ເອົາເອກະລາດຄືນມາ. ອະນຸສອນແຫ່ງວັນຈາກລາໃນເວລານັ້ນ ຄົງບໍ່ມີຍາມລືມໄດ້ເລີຍສຳລັບທ່ານພ້ອມດ້ວຍຍາດຕິພີ່ນ້ອງທຸກຄົນ ທີ່ພູມໃຈໃນສະຕິຊາດ ແລະ ຈິດໃຈຕໍ່ສູ້ຂອງລາວ. ທ່ານໄດ້ຕັດສິນໃຈເຂົ້າໄປຫາພໍ່ພ້ອມທັງອະທິບາຍເຫດຜົນແຫ່ງອຸດົມຄະຕິອັນສູງສົ່ງ ທີ່ຕົນໄດ້ມີມາແຕ່ນານ. ເມື່ອຟັງລູກຊາຍເວົ້າສິ້ນສຸດແລ້ວ ພໍ່ຫຼຽວເບິ່ງ ອຸຕະມະ ດ້ວຍສາຍຕາອັນເຄັ່ງຮ້ອນ ແລະ ດ້ວຍຫົວໃຈຄຽດແຄ້ນຕໍ່ສັດຕູຂອງຊາດແຕ່ກໍ່ແສນ

ເຈັບປວດ ໃນການຈາກໄປຄັ້ງນີ້ຂອງລູກຊາຍກົກທີ່ແສນຮັກ ຈຶ່ງເວົ້າອອກເປັນຄຳສັ່ງວ່າ : "ໄປກໍ່ໄປ ແຕ່ຕາບໃດເຈົ້າບໍ່ໄດ້ເອກະລາດ ມາສູ່ປະເທດຊາດ, ເຈົ້າຢ່າກັບຄືນມາໃຫ້ ພໍ່ເຫັນໜ້າອີກ . . . " ຫຼັງຈາກນັ້ນບໍ່ພໍເທົ່າໃດມື້ ທ່ານ ກໍ່ອຳລາທຸກຄົນເພື່ອເດີນທາງມຸ່ງໜ້າໄປ ເຂດທີ່ໝັ້ນດ້ວຍຄວາມເປັນຫ່ວງ ແລະຄິດເຖິງພໍ່ແມ່ຫຼາຍທີ່ສຸດ, ແຕ່ກໍ່ພາກພູມໃຈໃນການຕັດສິນໃຈ ຂອງຕົນຄັ້ງນີ້. . .ຄຳເວົ້າຂອງພໍ່ເປັນການປຸກລະດົມທາງອ້ອມໃຫ້ມີກຳລັງໃຈອັນໜັກແໜ້ນເພື່ອຕົນຈະໄດ້ປະຕິບັດໜ້າທີ່ປະກອບສ່ວນເຂົ້າໃນການຕໍ່ສູ້ກູ້ຊາດ ໃຫ້ສຸດກົກສຸດປາຍ. ອັນໜຶ່ງອີກຊ້ຳພັດຍັງມີເພື່ອນມິດບາງຄົນ ທີ່ບໍ່ເຫັນດີໃນການອອກໄປເຮັດການຕໍ່ສູ້, ຖືວ່າບໍ່ມີເຫດຜົນ, ຈະບໍ່ສຳເລັດແລະ ບໍ່ຈຳເປັນຈະປະຕິວັດດ້ວຍກຳລັງອາວຸດ ອັນນີ້ຍິ່ງເຮັດໃຫ້ ອຸຕະມະ ມີອົກມີໃຈແລະ ມານະອົດທົນຂຶ້ນຕື່ມອີກ.

ຕະຫຼອດໄລຍະ 30 ປີ ແຫ່ງການປະຕິວັດ ພາບພົດຂອງນັກຮົບວັດທະນະທຳຄົນໜຶ່ງ ທີ່ມີຄວາມຫ້າວຫັນສຸທັດນິຍົມ "ບ່າໜຶ່ງພາຍວີໂອລິງ ບ່າໜຶ່ງພາຍປືນ" ບົນສະໜາມຮົບຄືດັ່ງທ່ານນີ້ ຍັງເປັນຮູບພາບທີ່ສວຍງາມ ມີຊີວິດຊີວາ ແລະ ດຶງດູດຈິດໃຈຂອງຊາດລາວ ກໍ່ຄືຊາວຕ່າງປະເທດ ຢ່າງກ້ວາງຂວາງ. ນອກຈາກວຽກບ້ານການເມືອງ ຊຶ່ງເປັນວຽກງານຕົ້ນຕໍທີ່ພັກ-ລັດມອບໝາຍໃຫ້ແລ້ວ ທ່ານ ຍັງເອົາໃຈໃສ່ເຄື່ອນໄຫວ ດ້ານສິລະປະດົນຕຣີຢ່າງຂະຫຍັນຕື່ມອີກ ຄືຊ່ອຍຄວາມຄິດຄວາມເຫັນ ປະກອບສ່ວນສ້າງ ໂຮງຮຽນສິລະປະດົນຕຣີສູນກາງຂຶ້ນ ຢູ່ທີ່ບ້ານນາພາ ແລະ ລະດົມລູກຫຼານຮຽນເສບດົນຕີປະເພດຕ່າງໆ, ພິເສດແມ່ນເຄື່ອງເສບສາຍຄື: ຊໍອີ້ຊໍອູ້ ແລະ ວີໂອລິງ.

ໃນຈົດໝາຍຂຽນຈາກຊຳເໜືອ ສະບັບລົງ ວັນທີ 3 ມິຖຸນາ ປີ 1957 ສົ່ງເຖິງພໍ່ແມ່ ແລະ ຄອບຄົວ ມີບາງຕອນທ່ານ ອຸຕະມະ ໄດ້ເວົ້າຕໍ່ລູກສາວວ່າ: "ອຸທະກິເອີຍ ເຈົ້າມັກ

ດົນຕຣີບໍ່ ?ໃຫ້ ປຣັດຖະນະ ຊີວິໂອລົງ 3/4 ໃຫ້ ແລ້ວຮຽນໃຫ້ໄດ້ເນີ ຝ່າຍປະເທດລາວ ມີເດັກຍິງ 2 ຄົນ ອາຍຸ 15 ປີ ຫຼິ້ນວິໂອລົງເກັ່ງສົມຄວນ ນີ້ໜຶ່ງທາກຈະເຫັນເຂົາດອກ... ຢູ່ໂຮງຮຽນ ອຸທະກີ ຮຽນຮ້ອງເພັງບໍ່ ? ຄວນຮຽນດົນຕີຣເພື່ອໃຫ້ຈິດໃຈເບີກບານ..." ແມ່ນຈະໄປເຖິງໃສ ນອກຈາກປະຕິບັດພາລະໜ້າທີ່ ແລະ ວຽກງານອັນໜັກໜ່ວງກໍ່ຕາມ ອຸຕະມະ ບໍ່ເຄີຍລືມຄິດເຖິງສິລະປະດົນຕຣີ ແລະ ເພັງເລີຍ. ພອນສະຫວັນຂອງເພິ່ນໃນຄວາມຮັກມັກວິຊານີ້ ເຮັດໃຫ້ຄົນ ມີຈິດໃຈເບີກບານມ່ວນຊື່ນແທ້,ເພາະມັນເປັນອາຫານຫູອາຫານຕາ ທີ່ບຳລຸງກຳລັງໃຈໃຫ້ສາມາດເຮັດເນີນວຽກງານ ແລະ ດຳລົງຊີວິດແບບປອດປົງສົດໃສ ແລະ ບໍລິສຸດພຸດຜ່ອງແທ້.

ໃນຄືງເຂດຂອງການປະດິດຄິດແຕ່ງ ບັນຍາກາດຟົດຟື້ນປະຕິວັດໃນໄລຍະນັ້ນ ໄດ້ແຊກຊຶມເຂົ້າຈິດໃຈທ່ານຢ່າງເລິກເຊິ່ງເຮັດໃຫ້ເລືອດສີລະປິນໃນຕົວຂອງທ່ານ ອີກເທື່ອໜຶ່ງ ຖືກກະຕຸກບາກບັ່ນຈົນເກີດເປັນອາລົມຈິດ ແຕ່ງເພັງເດີນ ທີ່ມີຄວາມເຂັ້ມແຂງ ຂຶ້ນໄວວາ ນັ້ນກໍ່ຄືການໃຫ້ກຳເນີດກົດເພັງທີ່ມີຊື່ວ່າ: "ປົກປັກສັນຕິພາບ" ຊຶ່ງເປັນເພັງດັ່ງໃນເຂດປົດປ່ອຍເກົ່າຄາວນັ້ນ. ເນື້ອໃນຕົ້ນຕໍຂອງເພັງ ເໝືອນຄຳຮຽກຮ້ອງເດັດດ່ຽວຄວາມຕັດສິນໃຈສູງຂອງປວງຊົນລາວທັງຊາດ ເມື່ອປະສົມເຂົ້າກັບທຳນອງທີ່ມີລັກສະນະຂອງສຽງແກຕະລຸມບອນ ເພັງດັ່ງກ່າວຈຶ່ງກະທົບຢ່າງແຮງເຖິງຈິດໃຈຂອງຄົນ ເຮັດໃຫ້ເຂົາຖືກສະກົດຈິດທັງເພີ່ມຄວາມຂະຫຍັນຂັນແຂງ ໃນພາລະກິດຕໍ່ສູ້ກູ້ຊາດ ຢ່າງພິລາດອາດຫານ ເພື່ອຍາດເອົາໄຊຊະນະຄັ້ງສຸດທ້າຍ. "ປົກປັກສັນຕິພາບ" ເປັນເພັງທີ່ຮ້ອງງ່າຍ ຈື່ງ່າຍນັບແຕ່ຫຼານນ້ອຍເຍົາວະຊົນ ຈົນເຖິງຜູ້ເຖົ້າຜູ້ແກ່ ໃຜໆກໍ່ລ້ວນແຕ່ຮ້ອງເພັງນີ້ໄດ້ໂດຍສົມບູນ ແລະມັກເພັງດັ່ງກ່າວ ເພາະຊາວລາວທຸກທົ່ວໜ້າ ຮັກຫອມສັນຕິພາບຈຶ່ງເປັນເຫດພາໃຫ້ບົດເພັງຂອງທ່ານ ໄດ້ແຜ່ຜາຍຢ່າງກ້ວາງ

ຂວາງໃນໝູ່ມະຫາຊົນ ແລະ ຍັງໄດ້ຖືເປັນ ອາຫານທາງໃຈປະຈຳວັນ ຂອງຄົນລາວທຸກໆເຜົ່າອີກດ້ວຍ.

xxx

ຮູບຈຳນວນໜຶ່ງໃນປຶ້ມຫົວນີ້ ແມ່ນຄະນະສິລະປະກອນສູນກາງແນວລາວຮັກຊາດ ທີ່ທ່ານ ອຸຕະມະ ແລະທ່ານ ປະເສີດ ສີສະນົນ ໄດ້ນຳພາມາສະແດງທີ່ນະຄອນຫຼວງວຽງຈັນ ໃນໄລຍະລັດຖະບານປະສົມແຫ່ງຊາດປີ 1974. ການສະແດງໄດ້ຮັບການນິຍົມຊົມຊອບຫຼາຍທີ່ສຸດ ຈາກປະຊາຊົນນະຄອນຫຼວງວຽງຈັນ. ເຂົາເຈົ້າບໍ່ຄິດວ່າຝ່າຍ " ປະເທດລາວ " ຈະສາມາດສະແດງການຟ້ອນລຳທຳເພັງ ແລະ ກາຍະສິນໄດ້ຂັ້ນດີເດັ່ນແນວນັ້ນ... ໃນເວລາດຽວກັນເພິ່ນ ແລະ ທ່ານ ປະເສີດ ໄດ້ພານັກສະແດງຈຳນວນໜຶ່ງ ໄປຢ້ຽມຢາມບ້ານເຮືອນຂອງພໍ່ແມ່ ທ່ານ ອຸຕະມະ ເຊິ່ງແມ່ນ ເຄຫະສະຖານຫຼັກແຫຼ່ງຂອງຄອບຄົວລູກເຕົ້າພວກເພິ່ນ ແລະ ກໍ່ແມ່ນລູກຊາຍຫຼ້າ ແລະ ຄອບຄົວນັ້ນເອງຢູ່ ແລະ ປົກປັກຮັກສາແຕ່ໃດໆມາ ນັບແຕ່ກ່ອນພໍ່ແມ່ໄດ້ເສັຽຊີວິດ (ພໍ່ເສັຽຊີວິດປີ 1966 ແລະ ແມ່ ປີ 1967) ຕະຫຼອດຈົນເຖິງປັດຈຸບັນ. ທ່ານ ປະເສີດ ທີ່ເຄີຍຮູ້ຈັກກັບພໍ່ແມ່ ທ່ານ ອຸຕະມະ ມາແຕ່ກ່ອນ ມີຄວາມລະລຶກເຖິງພາບໃນເຮືອນຂອງພວກເພິ່ນ ເຊິ່ງໄດ້ສະແດງໃຫ້ເຂົ້າໃຈວ່າ ທຸກຄົນໃນຄອບຄົວລ້ວນແລ້ວແຕ່ ເປັນຜູ້ມັກຮັກສິລະປະເພັງແລະດົນຕີເປັນພິເສດ: ການຕີບແຕ່ງເຫັນມີເຄື່ອງດົນຕີພື້ນເມືອງລາວ ເປັນຕົ້ນ ແຄນ ລະນາດ ຊໍອູ້ ຊໍອີ...ໃນເມື່ອກ່ອນຢູ່ເດີ່ນບ້ານ,ນອກຈາກກິດຈະການປະຈຳວັນອື່ນໆ ຍາພໍ່ມອີງຍັງໄດ້ລ້ຽງນົກກາງແກຕັ້ງ 400 ຕົວ ຫາ 500 ຕົວ, ອັນສະແດງເຖິງ ວິຖີຊີວິດ ທີ່ມັກຮັກທຳມະຊາດ,ອິດສະຫຼະພາບແລະການອອກແຮງງານ.

XXX

ຖ້າຈະເວົ້າເຖິງວຽກງານການສຶກສາ ທີ່ປະຕິບັດມາແຕ່ປີ

1960 ແລະ ຖືເປັນວຽກຕົ້ນຕໍ ແຕ່ເວລານັ້ນມາ ທ່ານ ອຸຕະມະ ໄດ້ສ້າງຜົນງານຫຼາຍຢ່າງ. ພະນັກງານ ແລະ ອ້າຍນ້ອງທຸກຄົນ ທີ່ເຄີຍຢູ່ໃກ້ຊິດ ຫຼື ໄດ້ຮ່ວມຊີວິດການເປັນຢູ່ນຳເພິ່ນ ໄດ້ມີຄວາມ ຮູ້ສຶກ ແລະ ຄຳເຫັນເປັນເອກະພາບນຳກັນວ່າ ເປັນຜູ້ທີ່ມີຄຸນສົມ ບັດ ສົມທຳປະຕິວັດ ມີຄວາມສາມາດ ແລະ ຫຼັກໝັ້ນສະເໝີຕົ້ນ ສະເໝີປາຍຕະຫຼອດການ, ບໍ່ປ່ຽນທາດ, ບໍ່ຂາດຄຸນຂອງນັກປະ ຕິວັດທີ່ແທ້ຈິງ.

ທ່ານ ຄຳຜອງ ພົນວົງສາ ກຳມະການສູນກາງພັກ ປະ ທານຄະນະກຳມະການກິລາແຫ່ງຊາດ, ອະດີດ ຮອງລັດຖະມົນຕີ ກະຊວງສຶກສາ ໄດ້ເວົ້າວ່າ: " ຂ້າພະເຈົ້າ ຢາກເຫັນ ທ່ານ ອຸຕະມະ ວ່າເພິ່ນເປັນຄົນແນວໃດ. ໃຜໆກໍ່ເວົ້າເຖິງວ່າເປັນນັກ ປະພັນເພັງທີ່ລືຊື່ຂອງລາວ. ທ່ານ ອຸຕະມະ ເຄີຍເປັນຫົວໜ້າ ພະແນກສຶກສາ ທີ່ຕັ້ງຢູ່ບ້ານນາເມືອງ (ຈາກເມືອງວຽງໄຊ 4 ກມ.) ຍ້ອນຄວາມເປັນຫ່ວງເປັນໃຍເຖິງບັນດາຄູ ທ່ານ ຈຶ່ງຫາ ໂອກາດໄປໂອ້ລົມ,ເຝິກຫັດ ແລະສັ່ງສອນອ້າຍນ້ອງຕາມໂຮງຮຽນ ແລະ ບ້ານຕ່າງໆ. ເວລາຢູ່ນຳເພິ່ນທີ່ພູແຄ,ຂ້າພະເຈົ້າພ້ອມໝູ່ 4-5 ຄົນ ໃນປີ 1966 ໄດ້ຊວນກັນເອົາປືນກົນໜັກຂຶ້ນໄປຈອມ ພູ ທີ່ຫ່າງຈາກສຳນັກສຶກສາບໍ່ເຖິງ 100 ແມັດ ໄດ້ຍິງຍົນ 4-5 ນັດ ແຕ່ຍົນກໍ່ຍິງທະລົ່ມໃສ່ຄ້າຍ ແລະ ສຳນັກຈົມມຸ່ນໝົດ. ເມື່ອ ຂ້າພະເຈົ້າລົງມາ ເພິ່ນເລີຍເອີ້ນໄປຫາແລ້ວເວົ້າວ່າ:"ຄຳຜອງ ອ້າຍຊົມເຊີຍ ຄວາມກ້າຫານຂອງເຈົ້າ ແຕ່ຄວນຄິດເບິ່ງວ່າ ຖ້າ ເຈົ້າຕາຍບໍ່ມີເຫດຜົນຈະເປັນແນວໃດ ? ເຈົ້າບໍ່ມີອາວຸດ ແລະ ບົດຮຽນພຽງພໍເທື່ອ. ອັນໜຶ່ງອີກ ຖ້າຍົນທະລົ່ມລົງຕື່ມຖືກພະນັກ ງານໃນສຳນັກຕາຍໝົດເຈົ້າຈະເຮັດແນວໃດ ? ການປະຕິວັດບໍ່ ແມ່ນຈະຍອມຕາຍກັນຊື່ໆ. ຈະຍາດເອົາໄຊຊະນະ ຕ້ອງມີຄົນໃນ ນັ້ນມີພວກຄູອາຈານ,ໃຫ້ນ້ອງຄິດເບິ່ງຄັກໆເນີ ".ຕໍ່ມາສຳນັກສຶກ ສາກໍ່ຖືກທຳລາຍ,ເພິ່ນ ແລະ ຂ້າພະເຈົ້າ ຈຳຕ້ອງໄດ້ໄປຂອກ

ສຳນັກຢູ່ບ່ອນໃຫມ່, ອອກເດີນທາງແຕ່ 3 ໂມງເຊົ້າ ຂ້າມເຂົາລົງຫ້ວຍຍ່າງທາງຈົນມືດ ພໍດີ 6 ໂມງ ຮອດບ້ານນາພາ ໄປຕໍ່ບໍ່ໄດ້ ເພາະຍິນເວີ່ນຕະຫຼອດທາງ. ພວກເຮົາລໍຈັງຫວະຢູ່ຖ້ຳແຫ່ງຫນຶ່ງທັງພາກັນຫິວເຂົ້າ. ເພິ່ນບໍ່ຈົ່ມວ່າ ຢາກເຂົ້າຢາກນ້ຳແຕ່ຄິດອີດູຕົນເພິ່ນ, ຂ້າພະເຈົ້າເລີຍໄປຊອກຂໍເຂົ້ານຳກອງທະຫານທີ່ຢູ່ໃກ້ໆນັ້ນ. ທະຫານເອົາເຂົ້າໃຫ້ເຄິ່ງຖ້ວຍກັບແຈ່ວ. ເພິ່ນກິນແຕ່ 2-3 ຄຳທັງເວົ້າວ່າ:" ນ້ອງຍັງຫນຸ່ມ ນ້ອງກິນຫຼາຍໆ ອ້າຍກິນຫນ້ອຍກໍ່ໄດ້ເພາະເຖົ້າແລ້ວ" ... ໃນຖານະເພິ່ນເປັນຫົວຫນ້າຫ້ອງການສຶກສາ (ເຊິ່ງແມ່ນກະຊວງໃນເຂດປົດປ່ອຍ) ເມື່ອມີປະຊຸມວຽກຫ້ອງການ ຫຼືປຶກສາວຽກພັກ ວຽກບໍລິຫານ ຫຼື ວຽກວິຊາສະເພາະ ເພິ່ນເປັນຜູ້ອົດທົນ ທຸ່ນທ່ຽງ ເຍືອກເຢັນ ມີເຫດມີຜົນ ຕໍ່ມາວຽກທຸກຢ່າງ ກໍ່ຖືກແກ້ໄຂໄດ້ໂດຍດີ.

ຕະຫຼອດໄລຍະ ທີ່ຂ້າພະເຈົ້າຢູ່ນຳເພິ່ນຈົນເຖິງປີ 1983 ທ່ານ ອຸຕະມະ ມີຈຸດພິເສດບໍ່ວ່າເວລາສົງຄາມ ຫຼື ສັນຕິພາບ ຊຶ່ງລວມຄວາມໄດ້ວ່າ: ເພິ່ນເປັນຜູ້ຮັກຊາດຢ່າງດູດດື່ມຜູ້ຫນຶ່ງ ທີ່ຕັ້ງຕໍ່ບໍລິສຸດຕໍ່ການປະຕິວັດປົດປ່ອຍຊາດ, ບໍ່ເຄີຍຮຽກຮ້ອງເຖິງຜົນປະໂຫຍດສ່ວນຕົວ, ບໍ່ຈົ່ມທຸກຈົ່ມຍາກ, ກິນຫຍັງກໍ່ກິນໄດ້, ເງິນເດືອນສ່ຳໃດກໍ່ກິນສ່ຳນັ້ນ, ບໍ່ມັກກິນເຫຼົ້າ, ນຸ່ງຖືທຳມະດາມີສົ້ງເສື້ອ 2 ຄູ່ ຕະຫຼອດຊີວິດຕໍ່ສູ້, ບໍ່ມັກຄົບຟູມເຟືອຍ ຫຼິ້ນກິນໂດຍເພິ່ນເອງກໍ່ໄດ້ເຕືອນອ້າຍນ້ອງຢູ່ສະເຫມີ, ມີສະຕິສູງໃນການປ້ອງກັນຊີວິດເພື່ອເຮັດການປະຕິວັດໃຫ້ສຸດກົກສຸດປາຍ ເປັນຄົນທຸ່ນທ່ຽງ, ອົດທົນ, ບໍ່ຈົ່ມບໍ່ຮ້າຍ, ເປັນຜູ້ມີນ້ຳໃຈ ແລະ ເມດຕາກະຣຸນາຜູ້ອື່ນ ສູງຄວາມພະຍາຍາມໃສ່ວຽກງານສ້າງການສຶກສາ ໂດຍກໍ່ປະວຽກວັດທະນະທຳ ສິລະປະເພງ ແລະ ດົນຕີ ເຖິງຈະຕົກຢູ່ໃນສະພາບ ສົງຄາມດຸເດືອດກໍ່ຕາມ. ເພິ່ນເປັນນັກປະຕິວັດ ຊຶ່ງບໍ່ມີຜູ້ໃດຈົ່ມວ່າຈົ່ມຊັງເພິ່ນ. ໄລຍະຫຼັງໆນີ້ເພິ່ນເຄີຍສັ່ງຂ້າພະເຈົ້າເລື້ອຍໆວ່າ: "ອ້າຍເຖົ້າແລ້ວ ເກີງລູກຊ່ອຍອ້າຍແດ່ເນີ ຜອງເອີຍ !".

ທ່ານ ສີຈັນ ວົງລໍຄຳ ປະຈຸບັນເປັນຫົວໜ້າສຶກສາກຳແພງນະຄອນວຽງຈັນ ຜູ້ທີ່ຢູ່ໃກ້ຊິດທີ່ສຸດກັບ ທ່ານ ອຸຕະມະ ຍັງໄດ້ເລົ່າໃຫ້ຮູ້ອີກວ່າ: "ຂ້າພະເຈົ້າໄດ້ພົບ ທ່ານ ອຸຕະມະ ຄັ້ງທຳອິດໃນປີ 1962 ທີ່ເຮືອນພັກພະນັກງານກະຊວງສຶກສາ ແລະ ວັດທະນະທຳ ທີ່ຕັ້ງຢູ່ເຈີຍພູເມືອງຄັງໄຂ. ເວລານັ້ນນຶກວ່າແມ່ນພະນັກງານທຳມະດາ ພາຍຫຼັງຈຶ່ງຮູ້ວ່າ ເພິ່ນເປັນອະທິບໍດີ ກະຊວງສຶກສາແລະວັດທະນະທຳ. ເພິ່ນຢູ່ກິນຮ່ວມກັບພວກພະນັກງານໃນເຮືອນພັກ. ເກືອບວ່າທຸກໆວັນເສົາຕອນຄ່ຳ ເພິ່ນມັກເສບດົນຕີຣລາວເດີມຮ່ວມກັບ ທ່ານອຸ່ນເຮືອນ ແລະໝູ່ເພື່ອນ. ເພິ່ນນຸ່ງຖືແບບທຳມະດາ ແລະເປັນຄົນປະຢັດມັດທະຍັດທີ່ສຸດ: ເພິ່ນທ້ອນເຈັ້ຍຊອງຢາສູບໄວ້ໃຊ້ຂຽນໜັງສື !"

ໄລຍະທີ່ຝ່າຍກຳລັງເປັນກາງ ຂອງເຈົ້າ ສຸວັນນະພູມາ ຖືກປັ່ນປ່ວນຈົນແຍກກັນອອກເປັນສອງຝ່າຍ ທ່ານ ອຸຕະມະ ເປັນເປົ້າໝາຍໂຈມຕີ ຂອງພວກຝ່າຍປໍລະປັກ. ຈາກນັ້ນເພິ່ນຈຶ່ງໄດ້ຈັດຕັ້ງນຳພາພວກເຮົາ ລົງໂຄສະນາເຜີຍແຜ່ກົນອຸບາຍຂອງສັດຕູທີ່ຫວັງທຳລາຍມ້າງເພກຳລັງເປັນກາງ ທີ່ໄປນຳການປະຕິວັດ. ຜ່ານການໂຄສະນາອົບຮົມ ກໍ່ສາມາດເຮັດໃຫ້ຄູຈຳນວນຫຼວງຫຼາຍໃນແຂວງຊຽງຂວາງ ຫັນໜ້າເຂົ້າຫາກຳລັງຮັກຊາດ, ເຫຼືອແຕ່ຈຳນວນໜ້ອຍໆ ທີ່ແຍກອອກໄປຈາກພວກເຮົາ. ຕໍ່ມາທ່ານໄດ້ຂົນຂວາຍສ້າງຕັ້ງ ໂຮງຮຽນມັດທະຍົມຄັງໄຂ ທີ່ສອນເປັນພາສາລາວທັງໝົດ. ໃນເບື້ອງຕົ້ນຫຼາຍຄົນໄດ້ມີຄວາມເຫັນວ່າ: ຄົງບໍ່ສາມາດຕັ້ງໄດ້ ເພາະຂາດເອກະສານ ແລະ ປື້ມຕຳລາທັງຄູອາຈານກໍ່ບໍ່ມີລະດັບຊັ້ນສູງ. ແນວໃດກໍ່ຕາມ ເພິ່ນໄດ້ຕັດສິນໃຈຕັ້ງຂຶ້ນ (ເດືອນ ຕຸລາ 1964)ໂດຍເຊື້ອເຊີນເອົາອະດີດນັກສຶກສາທີ່ຮຽນຈົບຈາກຕ່າງປະເທດມາສອນ ເຊັ່ນ: ທ່ານ ຄຳລຽງ ພົນເສນາ, ທ່ານ ສຸລິວົງ, ທ່ານ ໜູພັນ, ທ່ານ ບຸດສະບົງ, ທ່ານ ມະຫາຟອງ ... ສ່ວນຄູປະຈຳມີແຕ່ສອງຄົນຄື: ທ່ານ

ປິດຈົບຄາວົງ ແລະຂ້າພະເຈົ້າເອງ...ໃນກາງປີ 1965 ເພິ່ນເລີຍຍ້າຍໄປຢູ່ຊຳເໜືອ ....

ທ່ານ ຄຳມ່ວນ ວົງຈັນດີ, ປະຈຸບັນຫົວໜ້າ ພະແນກວັດທະນະທຳ ກຳແພງນະຄອນວຽງຈັນ ໄດ້ເລົ່າເຖິງ ທ່ານອຸຕະມະ ວ່າ:" ຂ້າພະເຈົ້າຮູ້ຈັກ ທ່ານ ອຸຕະມະ ແຕ່ປີ 1961 ຮູ້ທ່ານເປັນນັກໂຄສະນາຖະແຫຼງຂ່າວ, ນັກວັດທະນະທຳ ແລະວັດທະນະທຳ ດ້ານສິລະປະວັນນະຄະດີ ເພັງແລະດົນຕີຣຜູ້ດີເດັ່ນຢູ່ໃນສັງຄົມລາວ. ໃນຕະຫຼອດຊີວິດ ເພິ່ນເຂົ້າຮ່ວມ ແລະ ໄດ້ປະຕິບັດການປ່ຽນແປງວັດທະນະທຳສັງຄົມລາວ ທີ່ພວກເຈົ້າປະເທດ ແລະ ພວກປະຕິການພາຍໃນສ້າງຂຶ້ນໃນ 5 ໄລຍະ ຄື: ຈາກສົງຄາມມາສູ່ສັນຕິພາບ ໃນທົ່ວຜືນແຜ່ນດິນລາວ, ຈາກໄລຍະເປັນຂ້ອຍຂ້າຂອງພວກຕ່າງຊາດມາສູ່ໄລຍະ ມີຄວາມເປັນເອກະລາດອິດສະລະພາບ, ຈາກໄລຍະ ລະບອບລາຊາທິປະໄຕ ມາສູ່ໄລຍະ ລະບອບປະຊາທິປະໄຕປະຊາຊົນ, ຈາກໄລຍະທີ່ປະຊາຊົນແຕກແຍກກັນເປັນຫຼາຍພັກຫຼາຍຝ່າຍ ແຜ່ນດິນໄດ້ຖືກຕັດແບ່ງເປັນຫຼາຍຕອນມາສູ່ໄລຍະ ເປັນຝ່າຍດຽວເປັນພັກດຽວ ຜືນແຜ່ນດິນອັນດຽວ ມີກຳລັງອັນດຽວ ແລະ ຈາກໄລຍະຄວາມຫຼ້າຫຼັງຄວາມເສົ້າໝອງ ມາສູ່ໄລຍະ ທີ່ມີແສງສະຫວ່າງແຫ່ງຍຸກສະໃໝ່.

ການປ່ຽນປີ້ນ ວັດທະນະທຳສັງຄົມ ທີ່ສັດຕູສ້າງ ຂຶ້ນໃນ 5 ໄລຍະນີ້ ບໍ່ແມ່ນເລື່ອງນ້ອຍ, ມັນແມ່ນເລື່ອງອັດສະຈັນແຫ່ງການນຳພາອັນສະຫຼາດສ່ອງໃສຂອງພັກ - ລັດເຮົາ, ຢູ່ໃນນີ້ກໍ່ມີທ່ານ ອຸຕະມະ ຈຸລາມະນີ ເຂົ້າຮ່ວມຂະບວນການປະຕິວັດຕັ້ງແຕ່ຕົ້ນຕະຫຼອດປາຍ. ຊີວິດຂອງທ່ານເຕັມໄປດ້ວຍຜົນງານລວມສ່ວນໜຶ່ງຂອງໄລຍະ ທີ່ເພິ່ນປະຕິບັດພາລະໜ້າທີ່ໃນຂອບເຂດຮັບຜິດຊອບຂອງຕົນ ຮ່ວມກັບມິດສະຫາຍຫຼາຍໆທ່ານດ້ວຍ ຊຶ່ງພວກເຮົາຄວນຈະຈາລຶກ ໄວ້ໃຫ້ເປັນແບບຢ່າງ ແລະ ແວ່ນແຍງແກ່ອະນຸຊົນຮຸ່ນຫຼັງ ".....

ທັດສະນະ ແລະ ຄວາມຮູ້ສຶກ ຂອງທ່ານສາດສະດາຈານ ປະລິນຍາເອກ ຟາມມິງຄາງ ( Professor - Doctor Pham Minh Khang) ຜູ້ຮັບຜິດຊອບຂະແໜງ ວິຊາການດົນຕີຣ "ທິດສະດີຕຳນິວິໄຈ ປະດິດຄິດແຕ່ງ ແລະ ບັນຊາຈ້ຽງຫວະ" ຂອງວິທະຍາຄານດົນຕີຣ ຮ່າໂນຍ ສ.ສ. ຫວຽດນາມ (Conservatory of Hanoi SRVietnamese) ມີບາງຕອນວ່າ: ເພງດອກຈຳປາຂອງລາວ ເປັນບົດເພງທີ່ມີລັກສະນະມະຫາຊົນກ້ວາງຂວາງ ຄວາມເປັນຊຸມລົມ (Community)ສູງ ແລະ ທັງມີລັກສະນະຂອງດົນຕຣີ "ກລາດສິກພື້ນເມືອງ" ທີ່ເປັນ ເປ ແຊກຊຶມເຂົ້າກັນຢ່າງເລິກລັບອີກດ້ວຍ .... »

ທີ່ບັນທຶກມາອ້າງເທິງນີ້ ພຽງແຕ່ເປັນຄວາມເຫັນຂອງບາງທ່ານ ໃນຈຳນວນເພື່ອນມິດຕັ້ງຫຼວງຫຼາຍທີ່ຢູ່ໃກ້ຊິດ ແລະ ຮ່ວມການຮ່ວມງານກັບເພິ່ນ.

ພາຍຫຼັງປະເທດຊາດທີ່ແສນຮັກ ໄດ້ຮັບການປົດປ່ອຍ ແລະ ຖືກສະຖາປະນາເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວັນທີ່ 2 ທັນວາ 1975, ອຸດົມການໃນຊີວິດຂອງທ່ານ ໄດ້ບັນລຸເຖິງຄວາມປາຖະໜາ ດັ່ງທີ່ຄາດໝາຍໄວ້. ອາລົມຈິດແຕ່ງເພງອີກເທື່ອໜຶ່ງ ຄືງຈະປະກົດຕົວຂຶ້ນອີກໃນໄລຍະອາຍຸ 70 ປີ ຂອງເພິ່ນ, ຫຼາຍຄົນເຄີຍຖາມວ່າຍາມໃດຈະແຕ່ງເພງອີກ ແຕ່ເພິ່ນເຄີຍຕອບວ່າ ດຽວນີ້ວຽກຫຼາຍໂພດບໍ່ທັນມີເວລາ "ອໍ້ບໍ່ອອກ" ບາດໄປພັກຜ່ອນກິນເບັຍບໍານານແລ້ວ ອອກໄປຕັ້ງບ້ານເຮືອນຢູ່ສວນກ່ອນຈຶ່ງຈະແຕ່ງເພງອີກແນ່ນອນ...ແຕ່ສຸດທີ່ເສຍດາຍ ທີ່ວັນເວລາແຫ່ງຄວາມຄາດຫວັງນັ້ນ ບໍ່ໄດ້ກາຍເປັນຄວາມຈິງ. ເພິ່ນໄດ້ເສຍຊີວິດກ່ອນ ໃນວັນທີ່ 8 ສິງຫາປີ 1984 ຍ້ອນອາການເລືອດດັນສູງ ໃນຂະນະທີ່ພວມດຳລົງຕຳແໜ່ງເປັນ ຮອງລັດຖະມົນຕີກະຊວງສຶກສາແລະກິລາແຫ່ງສ.ປ.ປ.ລາວ ຢ່າງສົມກຽດ.ໃນວັນທີ່ 12 ສິງຫາ ບັນດາ

ທ່ານຜູ້ນຳພັກຫຼາຍທ່ານ ຍາດຕິພີນ້ອງ ພຣະສົງ ສຳມະເນນ ຄູບາອາຈານ ເພື່ອນມິດໃກ້ ແລະ ໄກ ພະນັກງານ ນັກຮົບ ນັກຮຽນ ນັກສຶກສາ ປະຊາຊົນ ໄດ້ພາກັນໄປສົ່ງສະການ ແລະ ທ່ານຜູ້ນຳພັກຫຼາຍທ່ານ ຍາດຕິພີນ້ອງ ພຣະສົງ ສຳມະເນນ ຄູບາອາຈານ ເພື່ອນມິດໃກ້ ແລະ ໄກ ພະນັກງານ ນັກຮົບ ນັກຮຽນ ນັກສຶກສາ ປະຊາຊົນ ໄດ້ພາກັນໄປສົ່ງສະການ ແລະ ອຳລາທ່ານເປັນຄັ້ງສຸດທ້າຍ. ທ່ານ ອຸຕະມະ ໄດ້ຈາກໂລກນີ້ໄປ ແລ້ວແຕ່ຄຸນງາມຄວາມດີຂອງທ່ານ ຍັງຈາລຶກໄວ້ໃນດວງໃຈຂອງ ຊາວລາວທຸກທົ່ວໜ້າ,ພ້ອມດ້ວຍສຽງເພັງ ທີ່ອະມະຕະຂອງທ່ານ ກໍ່ຍັງມີຊີວິດ ຊີວາຢູ່ນຳພວກເຮົາ ແລະ ກໍ່ຈະຍືນຍົງຢູ່ຄູ່ຟ້າເມືອງ ລາວຈີນຊົ່ວຟ້າດິນສະຫຼາຍ.



ແຕ່ຊ້າຍຫາຂວາ: ທ.ອຸຕະມະ ຈຸລາມະນີ
ນ.ອຸທະກີ,ຍາພໍ່ ມອືງ, ນ.ໄຊປລາທິ (ຫຼານສາວ)
ແລະ ຍາແມ່ ເກີດ. ຖ່າຍ 1957, ສະໄຫມລາວລວມລາວຄັ້ງທໍາອິດ



ບ້ານເຮືອນຕຶກແຖວ ຂອງຍາພໍ່ມືອງ ຍາແມ່ເກີດ ຢູ່ຄຸ້ມວັດອົງຕື້
ນະຄອນວຽງຈັນ ຊຶ່ງເປັນບ່ອນກໍາເນີດລູກເຕົ້າຂອງເພິ່ນ



ສາມອ້າຍນ້ອງ ທ.ອຸຕະມະ ,ທ.ຕະລຸນະ ,ທ.ປຣາຖະນະ
ໄດ້ມາລວມກັນຄືເມື່ອກ່ອນ ຍ່າງຄົບຖ້ວນຄັ້ງທຳອິດໃນ ປີ 1975
ພາຍຫຼັງໄດ້ພັດພາກຈາກກັນເປັນເວລາ 30 ປີ



ອຸຕະມະ ຈຸລາມະນີ ເມື່ອອາຍຸໄດ້ 17 ປີ ກຳລັງເປັນນັກຮຽນຢູ່
"ນັດທະຍົມ ປາວີ" ໄດ້ເລີ່ມມີອາລົມຈິດຄິດປະພັນເພັງແລ້ວ
ຍ້ອນພອນສະຫວັນທາໄດ້ຍາກ ໃນໝູ່ນັກຮຽນລຸ້ນດຽວກັນ



ອຸຕະມະ ກຳລັງຂີ່ມ້າ ໃນຍາມພັກຜ່ອນຢູ່ພູເຂົາຄວາຍ ທ່ຽວຊົມທຳມະຊາດ
ໄປພ້ອມໆກັນ ອັນເກີດໃຫ້ມີອໍ້ແຕ່ງເພັງໃນທັນທີທັນໃດ



ທ.ອຸຕະມະ ພ້ອມດ້ວຍເດັກນັກຮຽນ ທີ່ເພິ່ນສອນຢູ່
ໂຮງຮຽນປະຖົມ ບ້ານບໍໂອ (ປີ 1939)



ແມ່ນຈະໄປເຖິງໃສ ຈະຂຶ້ນເຂົາລົງຫ້ວຍ ສີລະປິນ ອຸຕະມະ
ບໍ່ເຄີຍປະ ວິໂອລົງ ເລີຍ



ຍາຍ່າ ອຸທາ (ແມ່ຂອງພໍ່ມືອງ) ຢູ່ເຮືອນເພິ່ນເອງ
ທີ່ເມືອງທ່າແຂກ ແຂວງຄໍາມ່ວນ ເປັນຄົນຊົນຊັ້ນຊາວນາ



ອຸຕະມະ ພະເອກລະຄອນ ໃນເລື່ອງ "ອຳນາດໃນງານບຸນ"
ສະແດງອອກສູ່ ສາຍຕາມະຫາຊົນໃນ ປີ 1939
ຜູ້ທີ 2 ແຖວຕັ້ງ ແຕ່ຂວາຫາຊ້າຍ



ເມື່ອໄດ້ຍິນສຽງເພັງ "ໃນຕາບອກ" ອຸຕະມະ
ກໍສົ່ງຈົດຫມາຍ ແລະ ຮູບ ຝາກຄວາມຄິດຮອດຄິດເຖິງ
ຫາຄອບຄົວພໍ່ແມ່ ແລະນ້ອງທີ່ ວຽງຈັນ



ທ.ອຸຕະມະ ຈຸລາມະນີ ຕາງໜ້າໃຫ້ ຄະນະ ຄ.ອ.ວ
(ໂຄສະນະ ອົບຮົມ ວັດທະນະທໍາ)
ສູນກາງ ຣັເຫຼຽນໄຊ ທີ່ ປະທານ ໄກສອນ ພົມວິຫານ
ມອບໃຫ້ ກອງສິບລະປະສູນກາງ
ແນວລາວຮັກຊາດ ທີ່ເມືອງວຽງໄຊ (1970).



ຮູບຖ່າຍຢູ່ບ້ານພັກຂອງພໍ່ແມ່ (ຄຸ້ມວັດອົງຕື້) ພ້ອມດ້ວຍລູກຫຼານ
(1957 ລາວໂຣມລາວຄັ້ງທີ 1)
(ຊ້າຍສຸດ ທ. ອຸຕະມະ - ຂວາສຸດ ນ. ວຽງໄຊ ຈຸລາມະນີ)

ຕໍ່ມາໃນປີ 1975 ທ. ອຸຕະມະ ຈຸລາມະນີ ໄດ້ດຳລົງຕຳແໜ່ງຮອງລັດຖະມົນຕີ ກະຊວງ ສຶກສາແລະ ກິລາ ຈົນເຖິງວັນສຸດທ້າຍຂອງຊີວິດເພິ່ນ (8-1984)



ຍາພໍ່ມ໊ອງ ຜູ້ເປັນບິດາຂອງ ທ. ອຸຕະມະ
ຖ່າຍຢູ່ບ້ານພັກ ເພິ່ນທີ່ສະຫວັນນະເຂດ 1936

ຮູບເຫຼົ່ານີ້ ຖ່າຍໃນໂອກາດທີ່ ທ. ອຸຕະມະ
ນຳພາກອງສິລະປະສູນກາງ ແນວລາວຮັກຊາດ ເຂົ້າມາສະແດງ
ທີ່ນະຄອນວຽງຈັນ ໃນສະໄໝ ລັດຖະບານປະສົມແຫ່ງຊາດ ປີ 1974













<u>ພາກໂນດໂຊນແຟຊໂດຍ</u>: ຄຳພັນ ສິດທິລັດ
ນັກເປົ່າແກໂຕຣົມບົນ
ແລະ ຄົ້ນຄວ້າດົນຕີ

# ຈຳປາເມືອງລາວ

ທຳນອງ: ທ. ອຸຕະມະ ຈູລາມະນີ

Moderato ພໍດີ

ເນື້ອຮ້ອງ: ທ. ມະຫາພູມີ ຈິດຕະພົງ



2. ກິ່ນເຈົ້າສຳຄັນ ຕິດພັນຫົວໃຈ ເປັນຫນ້າຮັກໄຄ່
ແພງໄວ້ເຊີຍຊົມ ຍາມເຫງົາເຮົາດົມ ໂອ້ຈຳປາຫອມ
ເມື່ອດົມກິ່ນເຈົ້າ ປານພົບຊູ້ເກົ່າ ທີ່ພາກຈາກໄປ
ເຈົ້າເປັນດອກໄມ້ ທີ່ງາມວິໄລ ຕັ້ງແຕ່ໃດມາ
ເຈົ້າດວງຈຳປາ ນາລາຂວັນຮັກ ຂອງຮຽນນີ້ເອີຍ.

3. ໂອ້ດວງຈຳປາ ບຸບຜາເມືອງລາວ ງາມດັ່ງດວງດາວ
ຊາວລາວເພິ່ງໃຈ ເກີດຢູ່ພາຍໃນ ແດນດິນລ້ານຊ້າງ
ກ້າງໄດ້ພັດພາກ ເບຣະເທດຈາກ ບ້ານເກີດເມືອງນອນ
ເຮົາຈະເອົາເຈົ້າ ເປັນເພື່ອນຮ່ວມເຫງົາ ເທົ້າສິ້ນຊີວາ
ເຈົ້າດວງຈຳປາ ນາລາງາມຍິ່ງ ນິ່ງເມືອງເຮົາເອີຍ.

# ໃນຕາບອກ

Andantino ♩: 69 ບໍ່ຟ້າວ ເນື້ອຮ້ອງ ແລະ ທຳນອງ: ອຸດະນະ ຈູລາມະນີ




ຕາ ເປັນ ບຸນ ອ້າຍ ນຳ ນາ
ພາ ສາຍ ຕາ ປະ ສານ
ຈິ່ງ ສົ່ງ ຕາ ຫວານ ຫວານ ເປັນ ພະ ຍານ ໝັ້ນ ໄວ້
ແສງ ປະ ດັບ ຊວງ ໃນ
1.
ພາ ຫົວ ໃຈ ອາ ວອນ.
ໃຈ ອາ ວອນ. 54

# ເດືອນງາມຍາມໜາວ

Lento ♩: 50 ຊ້າ ເນື້ອຮ້ອງ ແລະ ທຳນອງ: ອຸຕະມະ ຈູລາມະນີ



2. ເດືອນງາມຍາມຫນາວ ແລພົບດວງດາວ ສົ່ງແສງທອງນາ
ເມື່ອເມກບົດຟ້າ ແຈ່ມໃສງາມຕາ ຊວນໃຫ້ນຶກຄິດ
ຊວນໃຫ້ນຶກປີດ ເອົານາດົນໄດ້ ໂອຍາມເດືອນເພັງ
ດວງເດືອນງາມເດັ່ນ ຄຽງຄູ່ດາຣາ ຫມູ່ດາວນ້ອຍ
ລອຍບິນນະພາ ຕິດໃຈຕິດຕາ ໃຫ້ຣຽນຝັນຫາ.

3. ຈະຈາກໂລກແລ້ວ ໂອຈັນດວງແກ້ວ ເມື່ອໃດນາໃຫມ່
ຢາກໄດ້ເຈົ້າໄວ້ ແສງເຈົ້າຕິດໃຈ ລ່ຳລຶກຫອນເຫັນ
ບໍ່ວາງວັນເວັ້ນ ເສຽດາຍເດືອນງາມ ໂອຈັນລາຟ້າ
ຈາກດວງດາຣາ ຫ່າງຄູ່ເຄີຍຄຽງ ເຫມືອນນ້ອງຫ່າງອ້າຍ
ກາຍໃຈເສົ້າຫມອງ ແລລະເມີນອງ ເດືອນລັບຕາໄກ

# ເດັດດອກຮັກ

Largo 44 ຊ້າ ເນື້ອຮ້ອງ ແລະ ທຳນອງ: ອຸຕະມະ ຈູລາມະນີ




ອັບ ດອກ ຮັກ ດວງ ນີ້ ແຕ່ ກ່ອນເຮົາເຄີຍ ພຽນກະ
ຫນອມ ຫວັງເດັດນາງດົມ ດອມ ກິ່ນ ຍ້ອນ ລວງ
ໃບ ເຫດ ສັນ ໃດ ເຂົາ ເດັດ ໄປ ດົມ
ຕ້ອງທຸກລະທົມ ໃຈ ເວນ ກໍາ ຈໍາ ໄປ
ແສນ ຄິດ ຫ່ວງ ໄຍ ເສຽ ແຮງ ທີດ ນໍ້າ ຂອກກິ່ງ ໃບ ງາມ
ຕາ ໔໒ ໂອ ! ເສຽດາຍດວງ ເອີຍ


ອັນ ຄວາມ ຫຼັງ ຄັ້ງ ກ່ອນ ມຸ້ງ ຫມາຍ ແນບ ຊິດ ສນິດ
ນ້ອງ ຫວັງໂຮມຮ່ວມປອງດອງ ທັງ ສອງ ນ້ອງ
ພີ່ ຄວນ ຫຼື ເດັດ ດອກເອົາ ໄປ ດົມ
ອົກລະບົມລະບອນໃຈ ເສຽ ແຮງ ແພງ ຫມາຍ
ບໍ່ ໄດ້ ເຊັ້ນ ວາຍ ອ້າຍ ແສນເສຽ ດາຍ ຄວາມ ຫຼັງ ຄັ້ງ
ກ່ອນ ອະ ນິດ ຈາ ດວງ ເອີຍ

# ປົກປັກສັນຕິພາບ

ເນື້ອຮ້ອງ ແລະ ທຳນອງ
ຂອງ ທ. ອຸຕະມະ ຈູລາມະນີ

March ♩: 104 ເດີນ ເຂັ້ມແຂງ




ໄປ ເພື່ອ ຊາດ ລາວ ວັດ ທະ ນາ ປະ ເທດ ລາວ
ແມ່ນແຜ່ນດິນຂອງລາວ ເອົາ ບໍ່ ໃຫ້ ໃຜ ມາຍາດແຍ່ງເອົາ
ໄປ ໄດ້ ລາວຈະ ຕ້ານລາວຈະ ສູ້ ປາບ ສັດ ຕູ ເພື່ອ ກອບ
1.
ກູ້ ສິດ ອໍາ ນາດ ມາ ໃຫ້ ຊາດ ລາວ ປະເທດ
2. Poco Rit
ໃຫ້ ຊາດ ລາວ

ພິມທີ່ໂຮງພິມປະຊາ
ຕາມ ທ ບ ເລກທີ່ 625/ພທປ
ລົງວັນທີ 10/11/94
ຈຳນວນພິມ 1000 ຫົວ